ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ
ISSN: 2664-6331 Homepage: https://ssj.sjnl.la/
https://doi.org/10.71026/ss.2024.01020




# ການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ

ປາດຖະໜາ ບຸນເພັງ, ເຂັມເພັດ ແສງທອງຄຳ, ແນະ ມະນີວົງ, ຝ້າຍ ສຸລິຍະແສງ, ສີສະຫວາດ ມະນີວົງ
ແລະ ພູວັນ ສິງຫານາດ, ສະຖາບັນຍຸຕິທຳແຫ່ງຊາດ
Email: bpatthana@gmail.com

**ຂໍ້ມູນບົດຄວາມ** ວັນທີສົ່ງ 12/3/2024 ວັນທີປັບປຸງຄັ້ງທີ 21/5/2024 ວັນທີຕອບຮັບ 30/6/2024

## ບົດຄັດຫຍໍ້

ການຄົ້ນຄວ້າກ່ຽວກັບ ການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ ແມ່ນມີຈຸດປະສົງເພື່ອສຶກສາເຖິງບັນດາມາດຕະການທັງທາງແພ່ງ ແລະ ທາງອາຍາຕໍ່ຜູ້ບໍ່ປະຕິບັດຄຳຕັດສິນຂອງສານໂດຍເຈດຕະນາ ວ່າບັນດາມາດຕະການທີ່ກ່ຽວຂ້ອງເໝາະສົມແລ້ວບໍ່, ສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ຫຼື ບໍ່, ບັນດາມາດຕະການທີ່ກຳນົດໄວ້ນັ້ນພຽງພໍ ແລະ ສອດຄ່ອງແລ້ວ ຫຼື ບໍ່ພ້ອມທັງຊອກໃຫ້ເຫັນເຖິງຜົນດີ ແລະ ຂໍ້ຄົງຄ້າງໃນການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ບໍ່ປະຕິບັດຄຳຕັດສິນຂອງສານ, ການສຶກສາໃນຄັ້ງນີ້ ໄດ້ນຳໃຊ້ວິທີການສຶກສາແບບຄຸນນະພາບເປັນຫຼັກຊຶ່ງຈະວິເຄາະຂໍ້ມູນຕາມເອກະສານ ຫຼື ແຫຼ່ງຂໍ້ມູນທຸຕິຍະພູມ ນອກຈາກນີ້ ຈະຫາຜົນການຄົ້ນ ຄວ້ານັ້ນ ແມ່ນຍັງຈະໄດ້ເອົາແຫຼ່ງຂໍ້ມູນມືສອງ ຫຼື ຂໍ້ມູນປະ ຖົມມະພູມ ຊຶ່ງໄດ້ມາຈາກການສຳພາດລົງເລິກບັນຫາຈາກພາກສ່ວນທີ່ກ່ຽວຂ້ອງເປັນຕົ້ນແມ່ນ ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳນະຄອນຫຼວງ, ຫ້ອງການຍຸຕິທຳເມືອງໄຊເສດຖາ, ເມືອງຈັນທະບູລີ, ເມືອງສີສັດຕະນາກ ແລະ ເມືອງສີໂຄດຕະບອງ ການສຶກສາແມ່ນສຶກສາສະເພາະພາຍໃນນະຄອນຫຼວງວຽງຈັນ. ແຫຼ່ງທີ່ສາມ ແມ່ນຈະໄດ້ມາຈາກການສັງເກດຈາກເອກະສານ ແລະ ຈາກສະພາບຄວາມເປັນຈິງຂອງການຈັດຕັ້ງປະຕິບັດຕົວຈິງ.

ຜົນການສຶກສາພົບວ່າ: ໃນການປະຕິບັດຄຳຕັດສິນຂອງສານໃນໄລຍະຜ່ານມາ ແມ່ນໄດ້ມີການນຳໃຊ້ມາດຕະການເກືອບວ່າທຸກຄະດີ ບໍ່ວ່າຈະເປັນການປະຕິບັດຄຳຕັດສິນຄະດີແພ່ງ ຫຼື ຄຳຕັດສິນຄະດີອາຍາ ເນື່ອງຈາກຜູ້ປະຕິບັດຄຳຕັດສິນຂອງສານບາງຄົນບໍ່ຈິງໃຈໃນການປະຕິບັດຄຳຕັດສິນຂອງສານ, ມາດຕະການທີ່ຖືກນຳໃຊ້ຫຼາຍທີ່ສຸດ ແມ່ນອອກຄຳສັ່ງຍຶດຊັບ, ການອອກຄຳສັ່ງອາຍັດຊັບ,ໃນຊ່ວງໄລຍະຂອງການກວດກາຊັບກ່ອນອອກຄຳສັ່ງນັ້ນ ແມ່ນໄດ້ມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງຕາມຂັ້ນຕອນ ຂອງກົດໝາຍ ແລະ ລະບຽບການ ເພື່ອໃຫ້ມີຄວາມໝັ້ນໃຈວ່າ ຊັບທີ່ຈະອອກຄຳສັ່ງອາຍັດ ຫຼື ຍຶດນັ້ນເປັນກຳມະສິດຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານແທ້ ຫຼື ເປັນກຳມະສິດຂອງບຸກຄົນອື່ນ ແຕ່ມີການມອບໃຫ້ເພື່ອປະຕິບັດຄຳຕັດສິນຂອງສານ ຫຼື ແມ່ນຊັບທີ່ກ່ຽວຂ້ອງກັບຄຳຕັດສິນຂອງສານ. ໃນການກວດກາຊັບ ສ່ວນຫຼາຍແລ້ວພາກສ່ວນກ່ຽວຂ້ອງກໍໃຫ້ການຮ່ວມມືເປັນຢ່າງດີ ແຕ່ບາງກໍລະນີແມ່ນມີຄວາມຊັກຊ້າເນື່ອງຈາກຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ຈິງໃຈ ໂດຍສະເພາະແມ່ນມີພຶດຕິກຳການຊຸກເຊື່ອງຊັບ, ສ່ວນຂັ້ນຕອນການປະເມີນລາຄາຊັບກໍໄດ້ສະເໜີແຕ່ງຕັ້ງຄະນະກຳມະການໂດຍສອດຄ່ອງກັບລະບຽບກົດໝາຍ ແຕ່ໃນການນຳໃຊ້ມາດຕະການນີ້ ສ່ວນໃຫຍ່ຈະມີບັນຫາຢູ່ຂັ້ນຕອນການປະເມີນລາຄາ ຊຶ່ງແນ່ນອນເຈົ້າຂອງຊັບ ຫຼື ຜູ້ຖືກປະຕິບັດຄຳຕັດສິນຂອງສານສ່ວນໃຫຍ່ຈະບໍ່ມີຄວາມພໍໃຈຕໍ່ລາຄາທີ່ປະເມີນມັກຈົ່ມວ່າປະເມີນລາຄາຕ່ຳ ຊຶ່ງໃນຄວາມເປັນຈິງນັ້ນກໍບໍ່ໄດ້ຕ່ຳ ເພາະໃນການປະເມີນລາຄາ ແມ່ນຄະນະກຳມະການຈາກພາກສ່ວນກ່ຽວຂ້ອງກໍໄດ້ປຶກສາຫາລືກັນລະອຽດ ແລະ ມີລະບຽບສະເພາະເປັນບ່ອນອີງ, ອີກບັນຫາໜຶ່ງໃນຂັ້ນຕອນການປະກາດຂາຍກໍບໍ່ມີໃຜມາຊື້ ຊຶ່ງຈະເປັນບັນຫາເຮັດໃຫ້ການປະຕິບັດຄຳຕັດສິນຂອງສານມີການແກ່ຍາວ ເຫດຜົນຍ້ອນ

ຊັບນັ້ນເປັນຊັບທີ່ໃຫຍ່ ແລະ ມີມູນຄ່າສູງ ເຊັ່ນ ທີ່ດິນ ແລະ ເຮືອນທີ່ຕັ້ງຢູ່ແຄມທາງໃຫຍ່ ຫຼື ໃນຕົວເມືອງເທດສະບານ.

ສ່ວນບັນຫາທີ່ວ່າ ບັນດາມາດຕະການທີ່ກ່ຽວຂ້ອງເໝາະສົມແລ້ວບໍ່, ສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ຫຼື ບໍ່, ບັນດາມາດຕະການທີ່ກຳນົດໄວ້ນັ້ນພຽງພໍ ແລະ ສອດຄ່ອງແລ້ວ ຫຼື ບໍ່ ຈາກການສຶກສາເຫັນວ່າ ບັດດາມາດຕາການຕ່າງໆ ທີ່ກຳນົດໄວ້ໃນກົດໝາຍຍັງບໍ່ໄດ້ກຳນົດລະອຽດ, ຄົບຖ້ວນກ່ຽວກັບວິທີ ແລະ ຂັ້ນຕອນໃນການປະຕິບັດ ເຮັດໃຫ້ການນຳໃຊ້ມາດຕະການຕ່າງໆ ທີ່ກຳນົດໄວ້ໃນກົດໝາຍຍັງມີຄວາມຫຍຸ້ງຍາກໃນການປະຕິບັດຕົວຈິງ ແລະ ອີກເຫດຜົນໜຶ່ງ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ແມ່ນມີເຈດຕະນາຫຼົບຫຼີກ ຫຼື ບໍ່ໃຫ້ການຮ່ວມມື ແລະ ບາງກໍລະນີບໍ່ໄດ້ຮັບການຮ່ວມມືຈາກພາກສ່ວນ ທີ່ກ່ຽວຂ້ອງ.

**ຄຳສຳຄັນ:** ມາດຕະການທາງກົດໝາຍ, ການປະຕິບັດຄຳຕັດສິນຂອງສານ, ທາງແພ່ງ ແລະ ທາງອາຍາ

# The legal measures for the enforcement of the court's judgment

Patthana BOUNPHENG, Khemphet SENGTHONGKHAM, Nae MANIVONG, Faiy SOULIYASENG, Sisavad MANIVONG and Phouvanh SINGHANAD, National Institute of Justice, Email: bpatthana@gmail.com

**Abstract**

The research on the legal measures for the enforcement of the court's judgment is intended to research on the civil and criminal measures against those who deliberately do not implement the court's judgment whether the related measures are appropriate, can be implemented in practice or not, whether the prescribed measures are sufficient and consistent or not, as well as to find out the benefits and defect in the legal measures for the implementation of the court's judgment. In this research, the main method of qualitative study will analyze the data based on documents or sources of information. In addition to the results of the research, second data sources or primary data will also be obtained from the interviews with the relevant parties, such as the Department of Management of the Implementa tion of Court Judgments, the Department of Vientiane Justice, and the Justice Office of Xay settha District, Chanthabuly District, Sysethany District, and Sykodthabong District. The research is only in Vientiane's capital. The third source is to be obtained from observations from documents and the reality of the implement tation.

The results of the research found that: in the implementation of the court judgment in the previous, measures have been used in almost all cases, whether it is the implementation of the judgment in civil cases or the judgment in criminal cases, however some of the court's judgment implementers are not sincere in the implementation of the court's judgment, the most used to measures are issuing orders to confiscate assets, issuing orders to seize assets, during the period of inspecting the assets before issuing the order, there is coordination with the relevant parties according to the procedures of the law and regulations to be confident that the assets to be ordered or seized are the right of the person who has been executed by the judgment of the court or is the right of another person but has been given to implement the judgment of the court or the property related to the judgment of the court. In the inspection of the property, most of the relevant parties cooperate well, but in some cases, there is a delay because the person who has been executed by the judgment of the court is not sincere. Another problem in the process of announcing the sale is that could not sell it, which will cause the execution of the court's judgment to be prolonged because the property is a high valuable property such as land and houses located on the main road or in municipal towns.

As for the issue of whether the related measures are appropriate, can be implemented in practice or not, and whether the prescribed measures are sufficient and consistent or not, from the study it is seen that the various articles prescribed in the law have not been defined in detail and complete about the methods and procedures for implementation, making the various measures prescribed on the law difficult to implement in practice and another reason is that the person who has been executed by the judgment of the court or the debtor has the intention and avoiding cooperating and some cases does not receive cooperation from the relevant authorities.

**Keywords:** legal measures, enforcement of court judgments, civil and criminal.

**ຄວາມເປັນມາ ແລະ ຄວາມສຳຄັນ**

ມາດຕະການໃນການປະຕິບັດຄຳຕັດສິນຂອງສານ ແມ່ນມາດຕະການຂອງອົງການປະຕິບັດຄຳຕັດສິນຂອງສານວາງອອກໃນລັກສະນະເປັນຄຳສັ່ງຕ່າງໆ ເພື່ອວາງໃສ່ຜູ້ບໍ່ປະຕິບັດຕາມຄຳຕັດສິນຂອງສານດ້ວຍຄວາມສະມັກໃຈທັງໆ ທີ່ຜູ້ກ່ຽວມີເງື່ອນໄຂໃນການປະຕິບັດຄຳຕັດສິນຂອງສານ ແຕ່ບໍ່ຍອມປະຕິບັດ, ເພື່ອຮັບປະກັນໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນຫຼືຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດໄດ້ຮັບການປະຕິບັດຢ່າງຖືກຕ້ອງຕາມຂັ້ນຕອນ, ກຳນົດເວລາ ແລະ ລະບຽບກົດໝາຍ.

ໃນສະພາບຄວາມເປັນຈິງຂອງສັງຄົມ, ເມື່ອມີຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ແລະ ຖືກສົ່ງໄປຍັງອົງການປະຕິບັດຄຳຕັດສິນຂອງສານນັ້ນ ບໍ່ໄດ້ໝາຍຄວາມວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານຈະປະຕິບັດຕາມດ້ວຍຄວາມສະໝັກໃຈ, ການບໍ່ຍິນດີປະຕິບັດດັ່ງກ່າວອາດຈະສະແດງອອກດ້ວຍການບໍ່ເຂົ້າມາພົບພະນັກງານປະຕິບັດຄຳຕັດສິນຂອງສານຕາມໝາຍຮຽກ ຫຼື ເອົາຕົວຫຼົບຫຼີກ, ມີການມອບໂອນກຳມະສິດກ່ຽວກັບຊັບສິນຂອງຕົນ ຫຼື ມີການຊຸກເຊື່ອງ, ຕໍ່ເຕີມຊັບ ຫຼື ປ່ຽນແປງລັກສະນະຂອງຊັບພາຍຫຼັງທີ່ສຳນວນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຖືກສົ່ງໄປຍັງອົງການປະຕິບັດຄຳຕັດສິນຂອງສານແລ້ວ ເພື່ອເປັນການຫຼົບຫຼີກຈາກການປະຕິບັດຄຳຕັດສິນຂອງສານ, ຊຶ່ງເຫດການດັ່ງກ່າວລ້ວນແຕ່ສົ່ງຜົນສະທ້ອນໂດຍກົງຕໍ່ການປະຕິບັດຄຳຕັດສິນຂອງສານ ແລະ ກໍມີຄວາມຫຍຸ້ງຍາກຫຼາຍທີ່ພະນັກງານປະຕິບັດຄຳຕັດສິນຂອງສານຈະແກ້ໄຂບັນຫາດັ່ງກ່າວໂດຍໄວໄດ້ ເນື່ອງຈາກວ່າຂັ້ນຕອນໃນການປະຕິບັດຄຳຕັດສິນຂອງສານທີ່ກົດໝາຍ ແລະ ລະບຽບການສະເພາະກຳນົດໄວ້ນັ້ນ ແມ່ນມີຫຼາຍຂັ້ນຕອນສົມຄວນ ປະເດັນທີ່ສຳຄັນກໍແມ່ນ ຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ໃຫ້ການຮ່ວມມື.

ຈາກບັນຫາທີ່ກ່າວມາ, ມາດຕະການຕໍ່ການປະຕິບັດ ຄຳຕັດສິນຂອງສານ ຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ທີ່ຈະນຳໃຊ້ຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃນກໍລະນີບໍ່ຍິນຍອມປະຕິບັດຄຳຕັດສິນຂອງສານ ໂດຍເຈດຕະນາ, ເນື່ອງຈາກວ່າການນຳໃຊ້ມາດຕະການ ຈະເຮັດໃຫ້ການປະຕິບັດຄຳຕັດສິນຂອງສານສຳເລັດລົງໄດ້ໂດຍສະເພາະການໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ການໃຊ້ແທນໜີ້ສິນຕາມຄຳຕັດສິນຂອງສານ ແລະ ເປັນວິທີການໜຶ່ງ ທີ່ບັງຄັບຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃຫ້ປະຕິບັດຕາມຄຳຕັດສິນຂອງສານ, ຖ້າບໍ່ມີການນຳໃຊ້ມາດຕະການດັ່ງກ່າວ ຈະເຮັດໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານຫຼຸດພົ້ນຈາກການປະຕິບັດ ແລະ ຈະເຮັດໃຫ້ຄຳຕັດສິນຂອງສານບໍ່ຖືກປະຕິບັດສຳເລັດໄດ້, ຊຶ່ງເປັນສາເຫດໜຶ່ງທີ່ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ແລະ ເກີດຄວາມບໍ່ພໍໃຈຕໍ່ການປະຕິບັດໜ້າທີ່ວຽກງານຂອງພະນັກງານທີ່ກ່ຽວຂ້ອງ ໂດຍສະເພາະຜູ້ທີ່ໄດ້ຮັບຜົນປະໂຫຍດຈາກຄຳຕັດສິນຂອງສານ.

ສະນັ້ນ, ບົດຄົ້ນຄວ້ານີ້ ຈຶ່ງໄດ້ສຶກສາຄົ້ນຄວ້າກ່ຽວກັບການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ບໍ່ປະຕິບັດຄຳຕັດສິນຂອງສານ ສຶກສາຢູ່ນະຄອນຫຼວງວຽງຈັນ ໂດຍສະເພາະແມ່ນ ວິເຄາະບັນດາມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ວ່າເໝາະສົມແລ້ວບໍ່, ສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ຫຼື ບໍ່, ບັນດາມາດຕະການທີ່ກຳນົດໄວ້ນັ້ນພຽງພໍ ແລະ ສອດຄ່ອງແລ້ວ ຫຼື ບໍ່, ຖ້ານຳໃຊ້ມາດຕະການດັ່ງກ່າວຢ່າງເຂັ້ມງວດແລ້ວສຳນວນຄຳຕັດສິນຍັງຈະຄ້າງປະຕິບັດຫຼາຍຄືກັບໄລຍະຜ່ານມາບໍ່, ຊຶ່ງບົດຄົ້ນຄວ້ານີ້ ຈະເປັນຂໍ້ມູນໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານໄດ້ນຳໃຊ້ເປັນບ່ອນອີງ ເພື່ອເຮັດໃຫ້ການປະຕິບັດຄຳຕັດສິນຂອງສານສຳເລັດຕາມຄາດໝາຍໂດຍສະເພາະການໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ການໃຊ້ແທນໜີ້ສິນຕາມຄຳຕັດສິນຂອງສານ, ເຮັດໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານປະຕິບັດຕາມຄຳຕັດສິນ, ເຮັດໃຫ້ຄຳຕັດສິນຂອງສານຖືກປະຕິບັດສຳເລັດ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກຄຳຕັດສິນຂອງສານ ເກີດຄວາມພໍໃຈຕໍ່ການປະຕິບັດໜ້າທີ່ວຽກງານຂອງພະນັກງານທີ່ກ່ຽວຂ້ອງ.

**ຈຸດປະສົງ**

1. ເພື່ອສຶກສາເຖິງບັນດາມາດຕະການທັງທາງແພ່ງ ແລະ ທາງອາຍາຕໍ່ການປະຕິບັດຄຳຕັດສິນຂອງສານ;

2. ສຶກສາວິເຄາະບັນດາມາດຕະການທີ່ກ່ຽວຂ້ອງ ວ່າເໝາະສົມແລ້ວບໍ່, ສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ຫຼື ບໍ່, ບັນດາມາດຕະການທີ່ກຳນົດໄວ້ນັ້ນພຽງພໍ ແລະ ສອດຄ່ອງແລ້ວ ຫຼື ບໍ່;

3. ເພື່ອຊອກໃຫ້ເຫັນເຖິງຜົນດີ ແລະ ຂໍ້ຄົງຄ້າງໃນການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ;

4. ເພື່ອສະເໜີແນວທາງໃນການປັບປຸງແກ້ໄຂບັນຫາການປະຕິບັດຄຳຕັດສິນຂອງສານທີ່ລ່າຊ້າ.

**ສົມມຸດຕິຖານຂອງການຄົ້ນຄວ້າ**

ເມື່ອມີຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຖືກສົ່ງມາຍັງອົງການປະຕິບັດຄຳຕັດສິນຂອງສານແລ້ວ ບໍ່ໄດ້ໝາຍຄວາມວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານຈະປະຕິບັດຕາມດ້ວຍຄວາມສະໝັກໃຈ, ການບໍ່ຍິນດີປະຕິບັດດັ່ງກ່າວອາດຈະສະແດງອອກດ້ວຍການບໍ່ເຂົ້າມາພົບພະນັກງານປະຕິບັດຄຳຕັດສິນຂອງສານຕາມໝາຍຮຽກ ຫຼື ເອົາຕົວຫຼົບຫຼີກ, ມີການມອບໂອນກຳມະສິດກ່ຽວກັບຊັບສິນຂອງຕົນ ຫຼື ມີການຊຸກເຊື່ອງ, ຕໍ່ເຕີມຊັບ ຫຼື ປ່ຽນແປງລັກສະນະຂອງຊັບ ພຶດຕິກຳດັ່ງກ່າວເປັນການຫຼົບຫຼີກຈາກການປະຕິບັດຄຳຕັດສິນຂອງສານ ສິ່ງຜົນສະທ້ອນໂດຍກົງຕໍ່ການປະຕິບັດຄຳຕັດສິນຂອງສານເຮັດໃຫ້ການປະຕິບັດຄຳຕັດສິນຂອງສານລ່າຊ້າ ຫຼື ປະຕິບັດບໍ່ສຳເລັດ ແລະ ເຮັດໃຫ້ຄະດີຄ້າງປະຕິບັດຢູ່ອົງການປະຕິບັດຄຳຕັດສິນຂອງສານ, ຊຶ່ງສະແດງອອກຢູ່ ມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 037/ຄບສພ, ສະບັບວັນທີ 18 ມິຖຸນາ2018ວ່າດ້ວຍການຍົກສູງປະສິດທິພາບ ການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ມະຕິກົມການເມືອງສູນກາງພັກ ສະບັບເລກທີ 112/ກມສພ, ສະບັບວັນທີ 20 ມິຖຸນາ2020ວ່າດ້ວຍ ການຍົກສູງປະສິດ ທິພາບ ການດຳເນີນຄະດີ ຕາມຂະບວນການຍຸຕິທຳ, ເອົາໃຈ ໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (ເປົ້າຫມາຍທີ 6: ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເຫມີພາບ, ຍຸຕິທຳແລະໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດແລະເຂັ້ມງວດ: (ຈັດຕັ້ງປະຕິບັດຄຳຕັດສິນທີ່ຍັງຄ້າງແລະຄຳຕັດສິນເຂົ້າໃໝ່ໃຫ້ໄດ້ 80%, ໃນນັ້ນ 20% ແມ່ນໃຫ້ຈັດຕັ້ງປະຕິບັດສຳເລັດແລະປິດສຳນວນຄະດີ).

ຈາກບັນຫາທີ່ກ່າວມາ ການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ ຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ທີ່ຈະນຳໃຊ້ຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃນກໍລະນີບໍ່ຍິນຍອມປະຕິບັດຄຳຕັດສິນຂອງສານ ໂດຍເຈດຕະນາ ,ເນື່ອງຈາກວ່າການນຳໃຊ້ມາດຕະການ ຈະເຮັດໃຫ້ການປະຕິບັດຄຳຕັດສິນຂອງສານສຳເລັດຕາມຄາດໝາຍໂດຍສະເພາະການໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ການໃຊ້ແທນໜີ້ສິນຕາມຄຳຕັດສິນຂອງສານ.

**ຄາດຄະເນຜົນຂອງການຄົ້ນຄວ້າ**

ພາຍຫຼັງສຳເລັດການຄົ້ນຄວ້າໃນຫົວຂໍ້: ການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ ສຶກສາຢູ່ນະຄອນຫຼວງ ຈະສາມາດຮັບຮູ້ໄດ້ບັນຫາຕ່າງໆ ດັ່ງນີ້:

1. ຮັບຮູ້ເຖິງ ບັນດາມາດຕະການທັງທາງແພ່ງ ແລະ ທາງອາຍາຕໍ່ການປະຕິບັດຄຳຕັດສິນຂອງສານ;

2. ຮັບຮູ້ເຖິງ ບັນດາມາດຕະການທີ່ກ່ຽວຂ້ອງ ວ່າເໝາະສົມແລ້ວບໍ່, ສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ຫຼື ບໍ່, ບັນດາມາດຕະການທີ່ກຳນົດໄວ້ນັ້ນພຽງພໍ ແລະ ສອດຄ່ອງແລ້ວ ຫຼື ບໍ່;

3. ຮັບຮູ້ເຖິງ ຜົນດີ ແລະ ຂໍ້ຄົງຄ້າງໃນການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ;

4. ຮັບຮູ້ເຖິງ ແນວທາງໃນການປັບປຸງແກ້ໄຂບັນຫາການປະຕິບັດຄຳຕັດສິນຂອງສານທີ່ລ່າຊ້າ.

**ການທົບທວນເອກະສານ**

**ລັດຖະທຳມະນູນ**

ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 98 ວັກ 1 ໄດ້ກຳນົດວ່າ "ຄຳຕັດສິນຂອງສານປະຊາ ຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ພົນລະເມືອງລາວທຸກຄົນ ຕ້ອງເຄົາລົບ" ແລະ ວັກ 2 "ບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ".

**ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ**

**ການປະຕິບັດຄຳຕັດສິນຂອງສານ**

ການປະຕິບັດຄຳຕັດສິນຂອງສານແມ່ນການເຄື່ອນ ໄຫວຂອງອົງການປະຕິບັດຄຳຕັດສິນຂອງສານ ແລະ/ຫຼືຄູ່ຄວາມໃນການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນແລະຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານສະບັບປັບປຸງ ປີ 2021ມາປະຕິບັດໃຫ້ຖືກຕ້ອງ

ແລະປາກົດຜົນເປັນຈິງເພື່ອຟື້ນຟູສິດແລະຜົນປະໂຫຍດຂອງລັດ, ລວມໝູ່, ການຈັດຕັ້ງແລະບຸກຄົນທີ່ຖືກລະເມີດຫຼືສູນເສຍໄປ.

ຄຳຕັດສິນຂອງສານ ແລະ ນິຕິກຳອື່ນທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານສະບັບປັບປຸງ ປີ 2021 ມີຜົນບັງຄັບຕໍ່ບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຊຶ່ງຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ.

ທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດແລະພົນລະເມືອງທຸກຄົນຕ້ອງເຄົາລົບພ້ອມກັນນັ້ນກໍມີພັນທະໃຫ້ການຮ່ວມມື, ຊ່ວຍເຫຼືອອັນຈຳເປັນແກ່ພະນັກງານປະຕິບັດຄຳຕັດສິນຂອງສານ.

**ການນຳໃຊ້ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານ**

ມາດຕະການໃນການປະຕິບັດຄຳຕັດສິນຂອງສານແມ່ນມາດຕະການຂອງອົງການປະຕິບັດຄຳຕັດສິນຂອງສານວາງອອກມີລັກສະນະເປັນຄຳສັ່ງຕ່າງໆ ເພື່ອວາງໃສ່ຜູ້ບໍ່ປະຕິບັດຕາມຄຳຕັດສິນຂອງສານດ້ວຍຄວາມສະມັກໃຈ, ໂດຍຜູ້ກ່ຽວມີເງື່ອນໄຂໃນການປະຕິບັດຄຳຕັດສິນຂອງສານ ແຕ່ບໍ່ຍອມປະຕິບັດເພື່ອຮັບປະກັນໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງຖືກຕ້ອງຕາມຂັ້ນຕອນ ແລະ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະ.

**ຕົວຢ່າງ:** ສານປະຊາຊົນນະຄອນຫຼວງວຽງຈັນໄດ້ລົງຄຳຕັດສິນເລກທີ25/ຂຕ.ກ ລົງວັນທີ 8 ສິງຫາ 2018 ກ່ຽວກັບສັນຍາກູ້ຢືມບອກວ່າ: ໃຫ້ທ້າວ **ກ** (ຈຳເລີຍ) ໃຊ້ແທນເງິນກູ້ຢືມຕົ້ນທຶນ 50.000.000 ກີບ ພ້ອມດອກເບ້ຍຈຳນວນ 8.000.000 ກີບ ໃຫ້ທ້າວ **ຂ** (ໂຈດ). ພາຍຫຼັງສານດັ່ງກ່າວໄດ້ລົງຄຳຕັດສິນແລ້ວບໍ່ມີຝ່າຍໃດຂໍອຸທອນແລະອົງການໄອຍະການປະຊາຊົນກໍບໍ່ໄດ້ສະເໜີຂັດຄ້ານສານຈຶ່ງໄດ້ສົ່ງສຳນວນຄຳຕັດສິນໄປຍັງອົງການປະຕິບັດຄຳຕັດສິນຂອງສານ.

ກໍລະນີຕົວຢ່າງດັ່ງກ່າວ, ຖ້າທ້າວ **ກ** (ຈຳເລີຍ) ຫາກບໍ່ສາມາດນຳເງິນມາຊຳລະໃຫ້ໂຈດຕາມຄຳຕັດສິນຂອງສານດ້ວຍຄວາມສະໝັກໃຈ, ພະນັກງານປະຕິບັດຄຳຕັດສິນຂອງສານ ສາມາດນຳໃຊ້ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານ ຕາມຂັ້ນຕອນຂອງກົດໝາຍ.

ກ່ຽວກັບມາດຕະການທີ່ຈະນຳໃຊ້ຕໍ່ຜູ້ບໍ່ປະຕິບັດຄຳຕັດສິນຂອງສານ ຫຼື ນຳໃຊ້ຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານນັ້ນ, ເປັນການບັງຄັບຮູບແບບໜຶ່ງເພື່ອໃຫ້ບຸກຄົນທີ່ກ່ຽວຂ້ອງຕ້ອງປະຕິບັດໃນການຊຳລະຄ່າເສຍຫາຍທາງແພ່ງ ຫຼື ໃຊ້ແທນໜີ້ສິນຕາມຄຳຕັດສິນຂອງສານ ແຕ່ການນຳໃຊ້ມາດຕະການຕ່າງໆຕ້ອງພິຈາລະນາກ່ຽວກັບບັນຫາຄວາມເໝາະສົມທາງດ້ານລະບຽບການ, ທາງດ້ານກົດໝາຍ ແລະສອດຄ່ອງກັບຄຳຕັດສິນທີ່ຈະປະຕິບັດ ຫຼື ສອດຄ່ອງກັບບຸກຄົນທີ່ຖືກປະຕິ ບັດຄຳຕັດສິນຂອງສານ, ຊຶ່ງບາງກໍລະນີບຸກຄົນຜູ້ຖືກປະຕິ ບັດຄຳຕັດສິນຂອງສານ ອາດບໍ່ມີຄວາມສາມາດໃນການປະຕິ ບັດແທ້ (ຜູ້ກ່ຽວບໍ່ມີເງິນ ແລະ ບໍ່ມີຊັບສິນ) ໂດຍບໍ່ມີເຈດຕະນາຫຼົບຫຼີກ, ກໍລະນີນີ້ເປັນປະເດັນທີ່ສຳຄັນວ່າພະນັກງານປະຕິ ບັດຄຳຕັດສິນຂອງສານຕ້ອງມີທັກສະ ຫຼື ວິທີການແກ້ໄຂໂດຍບໍ່ຂັດກັບກົດໝາຍ ຫຼື ລະບຽບການທີ່ກ່ຽວຂ້ອງ ແຕ່ສາມາດປະຕິບັດສຳເລັດໄດ້.

ການປະຕິບັດຄຳຕັດສິນຂອງສານມີມາດຕະການ ດັ່ງນີ້: ການພາຕົວ, ການຍຶດຊັບ, ການອາຍັດຊັບ, ການຫັກເງິນໃນບັນຊີຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ການຫັກລາຍຮັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ການຫັກລາຍໄດ້ຈາກການດຳເນີນທຸລະກິດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ການມອບເງິນ ທີ່ບຸກຄົນອື່ນຮັກສາ ຫຼື ມີໜີ້ຕ້ອງສົ່ງ, ມາດຕະການຮີບດ່ວນ ແລະ ມາດຕະການອື່ນ.

**ມາດຕະການພາຕົວ**

ໝາຍພາຕົວແມ່ນຄຳສັ່ງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ເຈົ້າໜ້າທີ່ຕຳຫຼວດ ນຳເອົາຕົວບຸກຄົນໃດໜຶ່ງເຂົ້າມາຫາອົງການທີ່ອອກຄຳສັ່ງດັ່ງກ່າວຕາມລະບຽບກົດໝາຍ. (ສະພາແຫ່ງຊາດ, ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງ ມາດຕາ 3 ຂໍ້ 27, 2008)

ໃນກໍລະນີຫາກໄດ້ຮັບໝາຍຮຽກສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍນັ້ນ ກໍຈະອອກຄຳສັ່ງພາຕົວ, ຄຳສັ່ງພາຕົວໃຫ້ປະຕິບັດໄດ້ແຕ່ຫົກໂມງຫາສິບແປດໂມງ ເວັ້ນເສຍແຕ່ໃນກໍລະນີຈະເອົາຕົວຫຼົບໜີ ຫຼື ບໍ່ມີທີ່ຢູ່ອັນແນ່ນອນ. ການປະຕິບັດຄຳສັ່ງພາຕົວແມ່ນສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ຕຳຫຼວດ, ກ່ອນຈະພາຕົວຕ້ອງອ່ານຄຳສັ່ງໃຫ້ຜູ້ຖືກພາຕົວຊາບ. ບໍ່ອະນຸຍາດໃຫ້ພາຕົວແມ່ຍິງຖືພາມານ ຫຼື ຄົນເຈັບປ່ວຍທີ່ບໍ່ສາມາດອອກຈາກ

ສະຖານທີ່ ຊຶ່ງໄດ້ຮັບການຢັ້ງຢືນຈາກຄະນະແພດ. (ສະພາແຫ່ງຊາດ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ ມາດຕາ 137, 2012)

**ການຍຶດຊັບ**

ການຍຶດຊັບໝາຍເຖິງການເອົາຊັບເຄື່ອນທີ່ມາໄວ້ເປັນຂອງກາງຕາມຄຳສັ່ງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນແລະອົງການປະຕິບັດຄຳຕັດສິນຂອງສານ.

ໃນກໍລະນີທີ່ມີການອອກຄຳສັ່ງຍຶດຊັບ ໃນຂັ້ນຕອນຂອງການດຳເນີນຄະດີແລ້ວ, ອົງການປະຕິບັດຄຳຕັດສິນຂອງສານ ສາມາດສືບຕໍ່ປະຕິບັດຕາມຄຳສັ່ງຍຶດຊັບດັ່ງກ່າວນັ້ນໄດ້ ໂດຍບໍ່ຈຳເປັນຕ້ອງອອກອີກ ສຳລັບຊັບປະເພດດຽວກັນນັ້ນ.

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງກວດກາຊັບຢູ່ສະຖານທີ່ສົງໄສວ່າມີຊັບ, ບັນຊີເງິນຝາກ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເຊັ່ນ ເຮືອນ,ສະຖາບັນການເງິນ ຫຼື ບ່ອນອື່ນທີ່ກ່ຽວຂ້ອງ.

ເຈົ້າໜີ້ (ຜູ້ທີ່ໄດ້ຮັບຜົນປະໂຫຍດ) ມີພັນທະສະໜອງຂໍ້ມູນເປັນລາຍລັກອັກສອນ ກ່ຽວກັບຊັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ.

ໃນການກວດກາຊັບ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເຮັດບົດບັນທຶກພ້ອມທັງຂຽນລາຍລະອຽດຂອງຊັບທີ່ກວດພົບ ໂດຍການເຂົ້າຮ່ວມຂອງເຈົ້າຂອງຊັບ ແລະ ອົງການປົກຄອງບ້ານ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ. ຜ່ານການກວດກາ ແລະ ຂຶ້ນບັນຊີຊັບສິນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ຊຶ່ງໄດ້ຮູ້ແຈ້ງກ່ຽວກັບປະເພດ,ຈຳນວນ, ສະຖານທີ່ເກັບມ້ຽນວັດຖຸສິ່ງຂອງ,ສິນຄ້າ ຫຼື ປະເພດສັງຫາລິມະຊັບ ທີ່ເປັນປະໂຫຍດໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຍຶດຊັບດັ່ງກ່າວມາຮັກສາໄວ້ໃນສະຖານທີ່ເໝາະສົມ.

ພະນັກງານປະຕິບັດຄຳຕັດສິນຂອງສານ ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດການຍຶດຊັບ ພາຍໃນເວລາ ເຈັດວັນລັດຖະການ ນັບແຕ່ວັນອອກຄຳສັ່ງຍຶດຊັບເປັນຕົ້ນໄປ.ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງເຮັດບົດບັນທຶກລະອຽດກ່ຽວກັບຊັບທີ່ໄດ້ຍຶດທຸກຄັ້ງ.

**ການອາຍັດຊັບ**

ການອາຍັດຊັບໝາຍເຖິງການບໍ່ອະນຸຍາດໃຫ້ຊື້ຂາຍ, ມອບໂອນ, ແລກປ່ຽນ,ຈຳນຳ,ຈຳນອງ, ຄໍ້າປະກັນ, ການເຊົ່າ, ຕໍ່ເຕີມ, ສ້ອມແປງ, ທຳລາຍຫຼືປ່ຽນແປງ ແລະ ອື່ນໆກ່ຽວກັບຊັບເຄື່ອນທີ່ຫຼືຊັບຄົງທີ່ລວມທັງບັນຊີເງິນຝາກໃນທະນາຄານທີ່ພົວພັນກັບຄະດີຕາມຄຳສັ່ງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະອົງການປະຕິບັດຄຳຕັດສິນຂອງສານ.

ໃນກໍລະນີທີ່ມີການອອກຄຳສັ່ງອາຍັດຊັບ ໃນຂັ້ນຕອນຂອງການດຳເນີນຄະດີແລ້ວ, ອົງການປະຕິບັດຄຳຕັດສິນຂອງສານ ສາມາດສືບຕໍ່ປະຕິບັດຕາມຄຳສັ່ງຍຶດຊັບດັ່ງກ່າວນັ້ນໄດ້ ໂດຍບໍ່ຈຳເປັນຕ້ອງອອກອີກ ສຳລັບຊັບປະເພດດຽວກັນນັ້ນ. ເຊັ່ນດຽວກັນກັບການຈະອອກຄຳສັ່ງຍຶດຊັບ, ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃຫ້ລະອຽດ, ຈະແຈ້ງ, ຊັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ກວດພົບນັ້ນ ໃນກໍລະນີເປັນບັນຊີເງິນຝາກ, ອະສັງຫາລິມະຊັບ ຊຶ່ງມີຂໍ້ມູນຈະແຈ້ງແລ້ວ,ທີ່ເປັນປະໂຫຍດໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດຊັບດັ່ງກ່າວໄວ້ ພາຍໃນເວລາ ຫ້າວັນລັດຖະການແລ້ວແຈ້ງໃຫ້ຄູ່ຄວາມ, ອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ. ໃນເວລາລົງແຈ້ງຄຳສັ່ງອາຍັດຊັບກັບທີ່ນັ້ນພະນັກ ງານປະຕິບັດຄຳຕັດສິນຂອງສານຕ້ອງເຮັດບົດບັນທຶກໄວ້ເພື່ອເປັນຫຼັກຖານ.

ເຖິງຢ່າງໃດກໍຕາມ, ກ່ຽວກັບການອາຍັດ ຫຼື ຍຶດຊັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ກົດໝາຍກໍຍັງມີຂໍ້ຫ້າມກ່ຽວກັບຊັບບາງປະເພດ ທີ່ບໍ່ອະນຸຍາດໃຫ້ຍຶດ ຫຼື ອາຍັດ ມາໃຊ້ແທນໜີ້ສິນ ຊຶ່ງມີດັ່ງນີ້:

1) ສິ່ງສັກກາລະບູຊາ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີມູນຄ່າບໍ່ເກີນ ໜຶ່ງລ້ານກີບຕໍ່ຫົວໜ່ວຍ;

2) ອາຫານສຳລັບກິນປະຈຳວັນ ແລະ ຢາປົວພະຍາດຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;

3) ວັດຖຸສິ່ງຂອງ ທີ່ໃຊ້ເປັນປະຈຳຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລະ ຂອງບຸກຄົນ ຊຶ່ງຢູ່ພາຍໃຕ້ການເບິ່ງແຍງລ້ຽງດູຂອງຜູ້ກ່ຽວ ເຊັ່ນ ເຄື່ອງນຸ່ງຫົ່ມ,ເຄື່ອງນອນ, ເຄື່ອງຄົວກິນ ແລະ ເຄື່ອງຫຼິ້ນເດັກນ້ອຍ ທີ່ມີມູນຄ່າບໍ່ເກີນຫ້າລ້ານກີບຕໍ່ຄົນ;

4) ວັດຖຸສິ່ງຂອງທີ່ຈຳເປັນ ສຳລັບການປະກອບອາຊີບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີມູນຄ່າບໍ່ເກີນຫ້າລ້ານກີບ.

**ການຫັກເງິນໃນບັນຊີຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ມີຄຳສັ່ງອາຍັດບັນຊີເງິນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແຕ່ຜູ້ກ່ຽວຍັງບໍ່ປະຕິບັດ ຫຼື ປະຕິບັດບໍ່ຄົບຖ້ວນ, ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກເງິນໃນບັນຊີດັ່ງກ່າວໃນຈຳນວນຍັງຄ້າງປະຕິບັດເພື່ອປະຕິບັດຄຳຕັດສິນຂອງສານ.

ອົງການຈັດຕັ້ງ ທີ່ຄຸ້ມຄອງບັນຊີເງິນທີ່ກ່ຽວຂ້ອງ ຕ້ອງຫັກ ແລະ ໂອນເງິນ ຕາມຈຳນວນທີ່ກຳນົດໄວ້ໃນຄຳສັ່ງດັ່ງກ່າວ ເຂົ້າບັນຊີຂອງອົງການປະຕິບັດຄຳຕັດສິນຂອງສານ ຫຼື ບັນຊີຂອງເຈົ້າໜີ້ຕາມຄຳສັ່ງນັ້ນ ພາຍໃນເວລາ ເຈັດວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສັ່ງ ເປັນຕົ້ນໄປ.

**ການຫັກລາຍຮັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີຊັບທີ່ຈະນຳມາປະຕິບັດ ແຕ່ຜູ້ກ່ຽວມີລາຍຮັບ ເປັນຕົ້ນ ເງິນເດືອນ ,ຄ່າແຮງງານ,ເງິນອຸດໜູນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກເອົາລາຍຮັບດັ່ງກ່າວ ເພື່ອປະຕິບັດຄຳຕັດສິນຂອງສານ.

ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ສູງສຸດບໍ່ໃຫ້ເກີນ ສາມສິບສ່ວນຮ້ອຍຂອງລາຍຮັບທັງໝົດໃນແຕ່ລະເດືອນ,ຍົກເວັ້ນຄູ່ຄວາມໄດ້ຕົກລົງກັນ ຫຼື ຕາມຄຳຕັດສິນຂອງສານ.

ສຳລັບຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີລາຍໄດ້ບໍ່ປົກກະຕິ ໃຫ້ຫັກໂດຍອີງໃສ່ລາຍໄດ້ຕົວຈິງ ແຕ່ຕ້ອງຮັບປະກັນເງື່ອນໄຂການດຳລົງຊີວິດຂອງຜູ້ກ່ຽວ ແລະ ບຸກຄົນທີ່ຢູ່ໃນຄວາມຮັບຜິດຊອບລ້ຽງດູຂອງຜູ້ກ່ຽວ.

ການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນ ບ່ອນທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີລາຍຮັບຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ມອບເງິນທີ່ຫັກນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**ການຫັກລາຍໄດ້ຈາກການດຳເນີນທຸລະກິດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ**

ໃນກໍລະນີຜູ້ຖືກປະຕິບັດຄຳຕັດສິນຂອງສານຫາກມີລາຍໄດ້ຈາກການດຳເນີນທຸລະກິດ ຫຼື ຈາກແຫຼ່ງລາຍໄດ້ອື່ນ ແຕ່ບໍ່ຍອມປະຕິບັດຄຳຕັດສິນຂອງສານໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຫັກລາຍໄດ້ດັ່ງກ່າວສູງສຸດບໍ່ໃຫ້ເກີນ ຫົກສິບສ່ວນຮ້ອຍ ຂອງລາຍໄດ້ສຸດທິ.

ການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນ ທີ່ມີພັນທະມອບລາຍໄດ້ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດຕາມຄຳສັ່ງດັ່ງກ່າວ ແລະ ມອບ ຫຼື ໂອນເງິນນັ້ນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**ການມອບເງິນ ທີ່ບຸກຄົນອື່ນຮັກສາ ຫຼື ມີໜີ້ຕ້ອງສົ່ງ**

ໃນກໍລະນີມີຫຼັກຖານຢ່າງຈະແຈ້ງຢັ້ງຢືນວ່າບຸກຄົນອື່ນໄດ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ,ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງໃຫ້ບຸກຄົນດັ່ງກ່າວມອບເງິນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ.

ຜູ້ຮັກສາເງິນ ຫຼື ມີໜີ້ຕ້ອງສົ່ງ ຕ້ອງມອບເງິນ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ຕາມຈຳນວນ ແລະ ກຳນົດເວລາທີ່ໄດ້ກຳນົດໄວ້ໃນຄຳສັ່ງດັ່ງກ່າວ.

ກ່ອນການມອບເງິນໃຫ້ເຈົ້າໜີ້, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານຊາບ ແລະ ເຂົ້າຮ່ວມໃນການປະຕິບັດ, ຖ້າຜູ້ກ່ຽວຫາກບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງມອບເງິນໃຫ້ເຈົ້າໜີ້ຂອງຜູ້ກ່ຽວ.

**ມາດຕະການຮີບດ່ວນ**

ອົງການປະຕິບັດຄຳຕັດສິນຂອງສານ ມີສິດຊີ້ຂາດ ຊັບສິ່ງຂອງ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເນື່ອງຈາກວ່າຊັບດັ່ງກ່າວຈະມີການປ່ຽນຮູບ ຫຼື ເສື່ອມເສຍຄຸນນະພາບກ່ອນການປະຕິບັດຄຳຕັດສິນຂອງສານ.

ກ່ຽວກັບການຊີ້ຂາດດັ່ງກ່າວ ອາດຈະເປັນການຂາຍຊັບແລ້ວນຳເງິນມາຮັກສາໄວ້ເພື່ອປະຕິບັດຕາມຄຳຕັດສິນຂອງສານໃນຂັ້ນຕອນຕໍ່ໄປ.

**ມາດຕະການອື່ນ**

ນອກຈາກບັນດາມາດຕະການທີ່ກ່າວມາຂ້າງເທິງແລ້ວ, ອົງການປະຕິບັດຄຳຕັດສິນຂອງສານອາດຈະນຳໃຊ້ມາດຕະການອື່ນໆ ທີ່ເຫັນວ່າເໝາະສົມກັບການປະຕິບັດຄຳຕັດສິນຂອງສານ ແລະ ບໍ່ເປັນການລະເມີດລະບຽບກົດໝາຍ ເຊັ່ນ: ການຍົກຍ້າຍ, ການກັກຕົວກັບທີ່ໃນເວລາປະຕິບັດຕົວຈິງ ຖ້າຫາກມີການຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ, ລາຍງານຕໍ່ອົງການໄອຍະການປະຊາຊົນ ເພື່ອດຳເນີນຄະດີຕໍ່ຜູ້ຖືກປະຕິບັດຄຳ

ຕັດສິນຂອງສານຕາມມາດຕາ 389ການບໍ່ປະຕິບັດຄຳຕົກລົງຂອງສານຕາມປະມວນກົດໝາຍອາຍາ.

### ການຄົ້ນຄວ້າທີ່ກ່ຽວຂ້ອງ

ບຸນຕາ ສ.ຜາບມີໄຊ ແລະ ຄະນະ (ຄວາມລ່າຊ້າຂອງການຈັກຕັ້ງປະຕິບັດຄຳຕັດສິນຂອງສານຄະດີແພ່ງ ສຶກສາຢູ່ແຂວງໄຊຍະບູລີ, ນະຄອນຫຼວງວຽງຈັນ ແລະ ແຂວງສະຫວັນນະເຂດ)

ສາເຫດທີ່ພາໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຄະດີແພ່ງຂອງສານລ່າຊ້າມີ 93.3% ແມ່ນຍ້ອນຈຳເລີຍຫຼົບຫຼີກຮອງລິງມາມີ 93.0% ແມ່ນຜູ້ເສຍຄະດີບໍ່ມີຊັບສິນໃຊ້ແທນ , ມີ 89.3% ແມ່ນຈຳເລີຍບໍ່ມາຕາມໝາຍຮຽກ ແລະ ຄູ່ຄວາມກົດໜ່ວງແກ່ຍາວເວລາ, ມີ 86.7% ແມ່ນຜູ້ທີ່ເສຍຄະດີບໍ່ຍອມປະຕິບັດຕາມ 80.7% ແມ່ນຍ້ອນພາກສ່ວນກ່ຽວຂ້ອງບໍ່ໃຫ້ການ ຮ່ວມມື, ມີ 75.2% ແມ່ນຍ້ອນພະນັກງານປະຕິບັດຄຳຕັດສິນຂາດປະສົບການ ແລະ ຍ້ອນ ເຄື່ອງມືພາຫະນະ ແລະງົບປະມານບໍ່ພຽງພໍ, ມີ 67.4% ຍ້ອນການແຊກແຊງຈາກບຸກຄົນອື່ນ , ມີ 64.1% ແມ່ນການຈັດຕັ້ງປະຕິບັດມີຫຼາຍຂັ້ນຕອນ, ມີ 63.7% ແມ່ນພະນັກງານປະຕິບັດບໍ່ ພຽງພໍ, ມີ 60.7% ແມ່ນພະນັກງານປະຕິບັດຈຳນວນໜຶ່ງຂາດຈັນຍາບັນ ຈັນຍາທຳ ແລະ ເລືອກປະຕິບັດຄະດີທີ່ມີຜົນປະໂຫຍດຕິດພັນ ມີ 59.6% ແມ່ນຍ້ອນພະນັກງານຈັດຕັ້ງ ປະຕິບັດບໍ່ມີແບບແຜນເຮັດວຽກ, ມີ 50.4% ຍ້ອນມີຄຳຕັດສິນ, ຄຳພິພາກສາຄະດີແພ່ງທີ່ໃຊ້ ໄດ້ຢ່າງເດັດຂາດເພີ່ມຂຶ້ນ ແລະມີ 45.6% ຍ້ອນຄຳຕັດສິນບໍ່ຈະແຈ້ງ.

ສຳລັບປັດໄຈທາງດ້ານກົດໝາຍ ແລະ ລະບຽບການ ຊຶ່ງພາໃຫ້ເກີດຄວາມລ່າຊ້າໃນການຈັດຕັ້ງປະຕິບັດຄຳຕັດສິນຄະດີແພ່ງ ແມ່ນຂະບວນການຈັດຕັ້ງປະຕິບັດມີຫຼາຍຂັ້ນຕອນ ບຸກຄະລາກອນໃນຂົງເຂດຈັດຕັ້ງປະຕິບັດຍັງບໍ່ພຽງພໍ ແລະງົບປະມານຍັງຈຳກັດ, ການຊີ້ນຳ ທາງສາຍຕັ້ງ ແລະ ສາຍຂວາງບໍ່ໄປທິດທາງດຽວກັນ, ການນຳໃຊ້ມາດຕະການຕໍ່ຜູ້ ປະຕິບັດຍັງບໍ່ຮັດກຸມ, ບໍ່ຈະແຈ້ງ ຈຶ່ງເຮັດໃຫ້ຜູ້ເສຍຄະດີຫຼົບຫຼີກ ແລະ ບໍ່ປະຕິບັດຕາມຄຳຕັດສິນຂອງສານ.

ເພື່ອເປັນການແກ້ໄຂຄວາມລ່າຊ້າໃນການປະຕິບັດຄຳຕັດສິນຄະດີແພ່ງໂດຍອີງຕາມ ຜົນການຄົ້ນຄວ້າ ເຫັນຄວນປັບປຸງແກ້ໄຂ ດັ່ງນີ້:

1) ນຳໃຊ້ມາດຕະການເດັດຂາດຕໍ່ຜູ້ບໍ່ຍິນຍອມປະຕິບັດ, ຜູ້ຫຼົບຫຼີກ ແລະ ຜູ້ບໍ່ມາຕາມໝາຍຮຽກ;

2) ປະກອບພະນັກງານໃຫ້ພຽງພໍ, ອົບຮົມຈັນຍາບັນຈັນຍາທຳພະນັກງານປະຕິບັດແລະມີມາດຕະການອັນເດັດຂາດຕໍ່ພະນັກງານຜູ້ທີ່ລະເມີດ;

3) ເພີ່ມງົບປະມານ;

4) ເພີ່ມຂັ້ນຕອນກ່ອນຈະນຳເອົາຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດໄປຈັດຕັ້ງປະຕິບັດ ຕ້ອງມີການສະເໜີຂອງຄູ່ກໍລະນີຝ່າຍໃດໜຶ່ງ, ພະນັກງານປະຕິບັດຕ້ອງໄດ້ປະເມີນມູນຄ່າຊັບສິນ ແລະ ຄະດີດັ່ງກ່າວຈະປະຕິບັດໄດ້ ຫຼື ບໍ່;

5) ປັບປຸງຂັ້ນຕອນການຈັດຕັ້ງປະຕິບັດຄຳຕັດສິນໃຫ້ງ່າຍຂຶ້ນສົມທົບ ແລະ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ.

### ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ ໄດ້ນຳໃຊ້ການຄົ້ນຄວ້າແບບຄຸນນະພາບ ຊຶ່ງວິທີການສຶກສາແບບຄຸນນະພາບນີ້ ແມ່ນຈະວິເຄາະຂໍ້ມູນຕາມເອກະສານ ຫຼື ແຫຼ່ງຂໍ້ມູນຕົວຈິງ ນອກຈາກນີ້ຈະຫາຜົນການຄົ້ນຄວ້ານັ້ນ ແມ່ນຍັງຈະໄດ້ເອົາແຫຼ່ງຂໍ້ມູນມືສອງ ຫຼື ແຫຼ່ງຂໍ້ມູນ ຊຶ່ງໄດ້ມາຈາກການສຳພາດລົງເລິກບັນຫາຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ແຫຼ່ງທີ່ສາມ ແມ່ນຈະໄດ້ມາຈາກເອກະສານ ແລະ ສະພາບຄວາມເປັນຈິງຂອງການ ຈັດຕັ້ງປະຕິບັດ.

### ການຄັດເລືອກພື້ນທີ່ການສຶກສາ

ສະຖານທີ່ດຳເນີນການຄົ້ນຄວ້າ ແມ່ນໄດ້ເລືອກເອົາສະເພາະຢູ່ ນະຄອນຫຼວງວຽງຈັນ ຄື: ກົມຄຸ້ມການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ ໄຊເສດຖາ, ເມືອງ ຈັນທະບູລີ, ເມືອງສີສັດຕະນາກ ແລະ ເມືອງ ສີໂຄດຕະບອງ ເພາະເປັນ 4 ເມືອງເທດສະບານ.

### ປະຊາກອນ ແລະ ກຸ່ມຕົວຢ່າງ

### ປະຊາກອນທີ່ນຳມາສຶກສາ

ປະຊາກອນຕົວຈິງ ທີ່ນຳມາເປັນແຫຼ່ງຂໍ້ມູນອັນສຳຄັນສຳລັບການຄົ້ນຄວ້ານີ້ ມີທັງໝົດ 50 ທ່ານ ໂດຍແມ່ນພະນັກງານຄຸ້ມຄອງ ແລະ ພະນັງານປະຕິບັດຄຳຕັດສິນທີ່ຢູ່ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳນະຄອນຫຼວງ, ຫ້ອງການຍຸຕິທຳເມືອງໄຊເສດຖາ, ເມືອງຈັນທະບູລີ, ເມືອງສີສັດຕະນາກ ແລະ ເມືອງສີໂຄດຕະບອງ ຊຶ່ງຈະເປັນແຫຼ່ງຂໍ້ມູນທີ່ສຳຄັນເພື່ອມາປະກອບການວິເຄາະວ່າມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ ວ່າເໝາະສົມແລ້ວບໍ່, ສາມາດຈັດຕັ້ງປະຕິບັດໄດ້

ໃນຕົວຈິງ ຫຼື ບໍ່, ບັນດາມາດຕະການທີ່ກຳນົດໄວ້ນັ້ນພຽງພໍ ແລະ ສອດຄ່ອງແລ້ວ ຫຼື ບໍ່.

**ວິທີການຄັດເລືອກກຸ່ມຕົວຢ່າງ**

ປະຊາກອນທີ່ຈະນຳໃຊ້ເພື່ອສຸ່ມຕົວຢ່າງໃນການສຶກສາຄັ້ງນີ້ ແມ່ນຄັດເລືອກພະນັກງານທີ່ຮັບຜິດຊອບປະຕິບັດຄຳຕັດສິນໂດຍກົງ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳນະຄອນຫຼວງ, ຫ້ອງການຍຸຕິທຳເມືອງໄຊເສດຖາ, ເມືອງຈັນທະບູລີ, ເມືອງສີສັດຕະນາກ ແລະ ເມືອງສີໂຄດຕະບອງ ຊຶ່ງພະນັກງານດັ່ງກ່າວນັ້ນແມ່ນຕິດພັນກັບການໃຊ້ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານໂດຍກົງ.

**ວິທີການກຳນົດກຸ່ມປະຊາກອນຕົວຢ່າງ**

ໃນການວິເຄາະຂໍ້ມູນທາງຄຸນນະພາບນັ້ນ ເພື່ອໃຫ້ໄດ້ຂໍ້ມູນ ແລະ ຄຳຕອບທີ່ເລິກເຊິ່ງ ແມ່ນໄດ້ມີວິທີການສຸ່ມຕົວຢ່າງທີ່ເໝາະສົມ ຊຶ່ງຈະບໍ່ຫຼາຍເກີນໄປ ຫຼື ໜ້ອຍເກີນໄປ. ອັນທີ່ສຳຄັນທີ່ສຸດແມ່ນສາມາດເປັນແຫຼ່ງຂໍ້ມູນໃນການຄົ້ນຄວ້າໄດ້ສຳເລັດຢ່າງສົມບູນ.

ປະຊາກອນທີ່ຈະສຶກສາ ໝາຍເຖິງປະຊາກອນທີ່ມີສ່ວນຮ່ວມໃນການນຳໃຊ້ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານຂອບເຂດແມ່ນກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳນະຄອນຫຼວງ, ຫ້ອງການຍຸຕິທຳເມືອງໄຊເສດຖາ, ເມືອງຈັນທະບູລີ, ເມືອງສີສັດຕະນາກ ແລະ ເມືອງສີໂຄດຕະບອງ.

**ວິທີ ແລະ ເຄື່ອງມືເກັບກຳຂໍ້ມູນ**

**ວິທີເກັບກຳຂໍ້ມູນ**

ການເກັບກຳຂໍ້ມູນແມ່ນຈະໄດ້ນຳໃຊ້ສອງວິທີຄື: ການຮອບຮອມຂໍ້ມູນທຸຕິຍະພູມ ແມ່ນອາໄສຮອບຮອມຂໍ້ມູນທາງດ້ານທິດສະດີ ແລະ ຫຼັກການຕ່າງໆທີ່ໄດ້ມາ ຊຶ່ງປະກອບມີ ມະຕິຄຳສັ່ງຕ່າງໆ ຂອງສູນກາງພັກ, ດຳລັດ, ກົດໝາຍ, ຄຳແນະນຳ, ຂໍ້ຕົກລົງ, ປຶ້ມຕຳລາ, ບົດລາຍງານ ແລະ ບົດສະຫຼຸບຂອງພາກສ່ວນທີ່ກ່ຽວຂ້ອງ.

ການຮອບຮອມຂໍ້ມູນທາງປະຖົມມະພູມ ແມ່ນຈະໄດ້ສຳພາດ ຜູ້ທີ່ມີສ່ວນຮ່ວມໃນການນຳໃຊ້ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານ ຊຶ່ງການສຳພາດດັ່ງກ່າວ ເປົ້າໝາຍ ແມ່ນພະນັກງານຄຸ້ມຄອງ ແລະ ພະນັກງານປະຕິບັດຄຳຕັດສິນທີ່ຢູ່ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳນະຄອນຫຼວງ, ຫ້ອງການຍຸຕິທຳເມືອງໄຊເສດຖາ, ເມືອງຈັນທະບູລີ, ເມືອງສີສັດຕະນາກ ແລະ ເມືອງສີໂຄດຕະບອງ.

**ເຄື່ອງມື**

ເຄື່ອງມື ແລະ ອຸປະກອນທີ່ໃຊ້ໃນການເກັບກຳຂໍ້ມູນປະກອບດ້ວຍ: ເຄື່ອງບັນທຶກສຽງ, ຄຳຖາມສຳພາດທີ່ບໍ່ມີໂຄງສ້າງ. ການສຳພາດແມ່ນຈະໄດ້ບັນທຶກເປັນລາຍລັກອັກສອນໃນເວລາສຳພາດ, ຂໍອະນຸຍາດອັດສຽງເພື່ອບັນທຶກ ແລະ ຍັງໃຊ້ສິ່ງອຳນວຍຄວາມສະດວກຕ່າງໆທີ່ມີຄວາມຈຳເປັນໃນການເກັບກຳຂໍ້ມູນ ແລະ ນຳໃຊ້ USB ເພື່ອບັນທຶກຂໍ້ມູນ, ນຳໃຊ້ຄອມພິວເຕີ, ໂທລະສັບ ເປັນເຄື່ອງມືໃນການເກັບກຳຂໍ້ມູນ.

**ວິທີການວິເຄາະຂໍ້ມູນ ແລະ ອະທິບາຍຜົນ**

ຫຼັງຈາກເກັບກຳຂໍ້ມູນມາແລ້ວ ຂໍ້ມູນຕ່າງໆ ແມ່ນຈະຖືກຈັດເປັນກຸ່ມຂອງແຕ່ລະຂໍ້ມູນທີ່ກ່ຽວຂ້ອງ ຫຼັງຈາກນັ້ນ ຂໍ້ມູນແມ່ນຈະຖືກນຳມາຈັດເປັນປະເພດເພື່ອວິເຄາະບັນດາຄຳຖາມການຄົ້ນຄວ້າວິໄຈ ໂດຍອີງໃສ່ຂໍ້ມູນຕົວຈິງທາງປະຖົມມະພູມ ແລະ ທຸຕິຍະພູມ ເພື່ອສຶກສາວິເຄາະບັນດາມາດຕະການທີ່ກ່ຽວຂ້ອງ ວ່າເໝາະສົມແລ້ວບໍ່, ສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ຫຼື ບໍ່, ບັນດາມາດຕະການທີ່ກຳນົດໄວ້ນັ້ນພຽງພໍ ແລະ ສອດຄ່ອງແລ້ວ ຫຼື ບໍ່ ກ່ຽວກັບການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ.

**ຜົນການຄົ້ນຄວ້າ**

**ຜົນການຄົ້ນຄວ້າຂໍ້ມູນທາງດ້ານເອກະສານ**

ຜ່ານການຄົ້ນຄວ້າຂໍ້ມູນທາງດ້ານເອກະສານເຫັນວ່າກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບທຳອິດ) ໄດ້ຖືກຮັບຮອງ ແລະປະກາດໃຊ້ຢ່າງເປັນທາງການ ໃນວັນທີ 15 ພຶດສະພາ 2004 ເປັນຕົ້ນມາ, ກົດໝາຍດັ່ງກ່າວໄດ້ຮັບການປັບປຸງ ປີ 2008 ແລະ ສະບັບລ່າສຸດແມ່ນ ປີ 2021 ນອກຈາກກົດໝາຍດັ່ງກ່າວກໍຍັງມີກົດໝາຍ ຫຼື ນິຕິກຳອື່ນທີ່ໄດ້ກົດນົດກ່ຽວກັບວຽກງານປະຕິບັດຄຳຕັດສິນຂອງສານ ດ້ວຍສະເພາະ ມາດຕະການໃນການປະຕິບັດຄຳຕັດສິນຂອງສານ ມາດຕາ 98 ວັກ 1 ຂອງລັດຖະທຳມະນູນ ໄດ້ກຳນົດວ່າ “ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ພົນລະເມືອງລາວທຸກຄົນ ຕ້ອງເຄົາລົບ” ແລະ ວັກ 2 “ບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີສ່ວນກ່ຽວຂ້ອງ ຕ້ອງ

ປະຕິ ບັດຢ່າງເຂັ້ມງວດ", ປະມວນກົດໝາຍອາຍາ, ສະບັບປີ 2017, ປະມວນກົດໝາຍແພ່ງ, ສະບັບ ປີ 2018, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບປັບປຸງປີ 2008, ກົດໝາຍວ່າດ້ວຍສະພາແຫ່ງຊາດ, ສະບັບປັບປຸງປີ 2015, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ສະບັບປັບປຸງ ປີ 2017, ກົດໝາຍວ່າດ້ວຍການ ດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012;

ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ,ສະບັບປັບປຸງປີ 2016, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ສະບັບປັບປຸງ ປີ 2016, ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມ ສະບັບປັບປຸງ, ເພີ່ມເຕີມປີ 2014, ກົດໝາຍປະຕິບັດຄຳຕັດສິນຂອງສານທາງແພ່ງຫວຽດນາມປີ 2008, ດຳລັດວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກະຊວງຍຸຕິທຳ, ສະບັບເລກທີ 110/ນຍ,ລົງວັນທີ 31 ກໍລະກົດ 2000, ດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເລກທີ /158ລບ ລົງວັນທີ4 ມິຖຸນາ 2013, ດຳລັດຂອງລັດຖະບານວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານເລກທີ158/ລບລົງວັນທີ4 ມິຖຸນາ2013, ດຳລັດວ່າດ້ວຍ ຈັນຍາບັນຂອງພະນັກງານ-ລັດຖະກອນ, ສະບັເລກທີ 184/ລບ, ລົງວັນທີ 28 ມິຖຸນາ 2019, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການຍຸຕິທຳ, ເລກທີ /0129ຄປຈ ລົງວັນທີ7 ກັນຍາ 2016, ຄຳສັ່ງຂອງທ່ານນາຍົກລັດຖະມົນຕີເລກທີ 38/ນຍ,ລົງວັນທີ 6 ພະຈິກ 2006, ຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຕິດຕາມກວດກາຂົງເຂດຍຸຕິທຳ, ເລກທີ /0449ຄລສ ລົງວັນທີ28 ມິຖຸນາ 2017, ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານເລກທີ 462/ກຍລົງວັນທີ 9 ພຶດສະພາ2017, ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຕິດຕາມກວດກາທົ່ວໄປ ເລກທີ /756ອອປສ ລົງວັນທີ 5 ພະຈິກ 2010, ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງແລະການຈັດຕັ້ງປະຕິບັດຄຳຕັດສິນຂອງສານເລກທີ 445/ກຍລົງວັນທີ 5 ເມສາ 2019, ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳກ່ຽວກັບວຽກງານການເງິນ, ການຮັບແລະມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານເລກທີ 446/ກຍລົງວັນທີ 5 ເມສາ 2019 ແລະ ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳກ່ຽວກັບການຕີລາຄາ, ການຂາຍແລະການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານເລກທີ 447/ກຍລົງວັນທີ 5 ເມສາ 2019.

**ຜົນການສຳພາດພະນັກງານກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ**

ຈາກການສຳພາດທ່ານ ກອງສີ ສາຍສຸດທາ ຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ເຫັນວ່າ ໃນການປະຕິບັດຄຳຕັດສິນຂອງສານໃນໄລຍະຜ່ານມາ ແມ່ນໄດ້ມີການນຳໃຊ້ມາດຕະການເກືອບວ່າທຸກຄະດີ ບໍ່ວ່າຈະເປັນການປະຕິບັດຄຳຕັດສິນຄະດີແພ່ງ ຫຼື ຄຳຕັດສິນຄະດີອາຍາ ເນື່ອງຈາກຜູ້ປະຕິບັດຄຳຕັດສິນຂອງສານບາງຄົນບໍ່ຈິງໃຈໃນການປະຕິບັດຄຳຕັດສິນຂອງສານ, ມາດຕະການທີ່ຖືກນຳໃຊ້ຫຼາຍທີ່ສຸດ ແມ່ນອອກຄຳສັ່ງຍຶດຊັບ, ການອອກຄຳສັ່ງອາຍັດຊັບ,ໃນຊ່ວງໄລຍະຂອງການກວດກາຊັບກ່ອນອອກຄຳສັ່ງນັ້ນ ແມ່ນໄດ້ມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການ ເພື່ອໃຫ້ມີຄວາມໝັ້ນໃຈວ່າ ຊັບທີ່ຈະອອກຄຳສັ່ງອາຍັດ ຫຼື ຍຶດນັ້ນເປັນກຳມະສິດຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານແທ້ ຫຼື ເປັນກຳມະສິດຂອງບຸກຄົນອື່ນ ແຕ່ມີການມອບໃຫ້ເພື່ອປະຕິບັດຄຳຕັດສິນຂອງສານ ຫຼື ແມ່ນຊັບທີ່ກ່ຽວຂ້ອງກັບຄຳຕັດສິນຂອງສານແທ້. ໃນການກວດກາຊັບ ສ່ວນຫຼາຍແລ້ວພາກສ່ວນກ່ຽວຂ້ອງກໍໃຫ້ການຮ່ວມມືເປັນຢ່າງດີ ແຕ່ບາງກໍລະນີແມ່ນມີຄວາມຊັກຊ້າເນື່ອງຈາກຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ຈິງໃຈ ມີການຊຸກເຊື່ອງຊັບ, ຂັ້ນຕອນການປະເມີນລາຄາຊັບກໍໄດ້ສະເໜີແຕ່ງຕັ້ງຄະນະກຳມະການໂດຍສອດຄ່ອງກັບລະບຽບກົດໝາຍ ແຕ່ໃນການນຳໃຊ້ມາດຕະການນີ້ ສ່ວນໃຫຍ່ຈະມີບັນຫາຢູ່ຂັ້ນຕອນການປະເມີນລາຄາ ຊຶ່ງແນ່ນອນເຈົ້າຂອງຊັບ ຫຼື ຜູ້ຖືກປະຕິບັດຄຳຕັດສິນຂອງສານສ່ວນໃຫຍ່ຈະບໍ່ມີຄວາມພໍໃຈຕໍ່ລາຄາທີ່ປະເມີນມັກຈົ່ມວ່າປະເມີນລາຄາຕໍ່າ ຊຶ່ງໃນຄວາມເປັນຈິງນັ້ນກໍບໍ່ໄດ້ຕໍ່າ ເພາະໃນການປະເມີນລາຄາ ແມ່ນຄະນະກຳມະການຈາກພາກສ່ວນກ່ຽວຂ້ອງກໍໄດ້ປຶກສາຫາລືກັນລະອຽດ ແລະມີລະບຽບສະເພາະເປັນບ່ອນອີງ, ອີກບັນຫາໜຶ່ງໃນຂັ້ນ

ຕອນການປະກາດຂາຍກໍບໍ່ມີໃຜມາຊື້ ຊຶ່ງຈະເປັນບັນຫາເຮັດໃຫ້ການປະຕິບັດຄໍາຕັດສິນຂອງສານມີການແກ່ຍາວ ເຫດຜົນຍ້ອນຊັບນັ້ນເປັນຊັບທີ່ໃຫຍ່ ແລະ ມີມູນຄ່າສູງ ເຊັ່ນ ທີ່ດິນ ແລະ ເຮືອນທີ່ຕັ້ງຢູ່ແຄມທາງໃຫຍ່ ຫຼື ໃນຕົວເມືອງເທດສະບານ.

ໃນການການປະຕິບັດຄໍາຕັດສິນຂອງສານ ບາງກໍລະນີໄດ້ມີການອອກຄໍາສັ່ງພາຕົວ, ການອອກຄໍາສັ່ງພາຕົວກໍໄດ້ອອກເປັນປົກກະຕິຕາມລະບຽບກົດໝາຍ ໃນກໍລະນີທີ່ຮຽກຜູ້ຖືກປະຕິບັດຄໍາຕັດສິນຂອງສານແລ້ວ ແຕ່ຜູ້ກ່ຽວບໍ່ໄດ້ປະຕິບັດ, ແຕ່ສ່ວນຫຼາຍການອອກຄໍາສັ່ງພາຕົວ ບໍ່ໄດ້ຮັບການປະຕິບັດເຕັມສ່ວນ ເນື່ອງຈາກການປະຕິບັດຄໍາສັ່ງດັ່ງກ່າວ ແມ່ນພາກສ່ວນເຈົ້າໜ້າທີ່ຕໍາຫຼວດ ຊຶ່ງສ່ວນໃຫຍ່ພາກສ່ວນກ່ຽວຂ້ອງຈະບໍ່ຄ່ອຍໃຫ້ຄວາມຮ່ວມມື.

ການນໍາໃຊ້ມາດຕະການ ການຫັກເງິນໃນບັນຊີ ກໍໄດ້ປະຕິບັດບາງກໍລະນີ, ແຕ່ສ່ວນຫຼາຍແມ່ນບໍ່ສາມາດປະຕິບັດໄດ້ ເນື່ອງຈາກ ທາງພາກສ່ວນທະນາຄານບໍ່ໃຫ້ການຮ່ວມມືໂດຍມີເຫດຜົນວ່າ ທະນາຄານມີຄວາມຈໍາເປັນໃນການຮັກສາຄວາມລັບຂອງລູກຄ້າ ແລະ ບໍ່ໃຫ້ອົງການປະຕິບັດຄໍາຕັດສິນຂອງສານຫັກເງິນໃນບັນຊີ ເພາະຈະເສຍລູກຄ້າ.

ການຫັກລາຍຮັບຂອງຜູ້ຖືກປະຕິບັດຄໍາຕັດສິນຂອງສານສ່ວນໃຫຍ່ແມ່ນການຫັກຢູ່ງົບປະມານສໍາລັບຜູ້ຖືກປະຕິບັດຄໍາຕັດສິນຂອງສານທີ່ປະກອບອາຊີບເປັນນັກທຸລະກິດ, ຊຶ່ງການນໍາໃຊ້ມາດຕະການນີ້ ສ່ວນຫຼາຍແມ່ນໄດ້ຮັບການຮ່ວມມືຈາກພາກສ່ວນກ່ຽວຂ້ອງ ແລະ ສາມາດປະຕິບັດໄດ້ຮັບຜົນສໍາເລັດໃນຫຼາຍໆຄໍາຕັດສິນຂອງສານ, ສ່ວນການຫັກລາຍໄດ້ຂອງຜູ້ຖືກປະຕິບັດຄໍາຕັດສິນທີ່ມີລາຍໄດ້ບໍ່ປົກກະຕິ ແລະ ມີລາຍໄດ້ເລັກນ້ອຍ ແມ່ນບໍ່ໄດ້ນໍາໃຊ້ມາດຕະການນີ້ເລີຍ.

ການມອບໃຫ້ບຸກຄົນອື່ນຮັກສາ ແມ່ນບໍ່ໄດ້ນໍາໃຊ້ເລີຍ.

ສໍາລັບມາດຕະການອື່ນ ສ່ວນໃຫຍ່ກໍນໍາໃຊ້ຄໍາສັ່ງຫ້າມບໍ່ໃຫ້ຜູ້ຖືກປະຕິບັດຄໍາຕັດສິນຂອງສານເດີນທາງອອກນອກປະເທດ ແລະ ກໍເປັນມາດຕະການທີ່ພາກສ່ວນກ່ຽວຂ້ອງໃຫ້ການຮ່ວມມືເປັນຢ່າງດີ ສ່ວນຫຼາຍຖເາມີການນໍາໃຊ້ມາດຕະການນີ້ ແມ່ນໄດ້ຮັບຜົນສໍາເລັດ.

**ຜົນການສໍາພາດພະນັກງານພະແນກຍຸຕິທໍານະຄອນຫຼວງ**

ຈາກການສໍາພາດທ່ານ ວໍລະວັດ ໂຄດປັນຍາ ຮອງຫົວໜ້າຂະແໜງປະຕິບັດຄໍາຕັດສິນຂອງສານນະຄອນຫຼວງ (ພະແນກຍຸຕິທໍາ) ທ່ານໄດ້ອະທິບາຍກ່ຽວກັບການໃຊ້ມາດຕະການໃນການປະຕິບັດຄໍາຕັດສິນຂອງສານ ໃນໄລຍະຜ່ານມາ ດັ່ງນີ້:

ມາດຕະການພາຕົວ ແມ່ນມາດຕະການໜຶ່ງຂອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແຕ່ກົດໝາຍບໍ່ໄດ້ກໍານົດຂັ້ນຕອນອັນລະອຽດເຮັດໃຫ້ການພາຕົວຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫຼື ລູກໜີ້ ມາພົບພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແມ່ນຍັງມີຄວາມຫຍຸ້ງຍາກໃນການປະຕິບັດຕົວຈິງ ເພາະຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫຼື ລູກໜີ້ ແມ່ນມີເຈດຕະນາຫຼົບຫຼີກ ຫຼື ຍ້າຍທີ່ຢູ່ເຮັດໃຫ້ຫຍຸ້ງຍາກໃນການຕິດຕາມ, ອີກປະການໜຶ່ງຖ້າບໍ່ໄດ້ຮັບການຮ່ວມມືຈາກເຈົ້າໜ້າທີ່ໆກ່ຽວຂ້ອງກໍຈະບໍ່ໄດ້ຮັບຜົນ.

ການຍຶດຊັບແມ່ນມີຄວາມຫຍຸ້ງຍາກຫຼາຍ ເພາະສ່ວນຫຼາຍເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບ ຈະບໍ່ໃຫ້ຄວາມຮ່ວມມື ຫຼື ມີການຂັດຂວາງ, ຕ້ອງອາໄສຄວາມຮ່ວມມື ແລະ ຊ່ວຍ ເຫຼືອຈາກເຈົ້າໜ້າທີ່ຕໍາຫຼວດ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຖ້າບໍ່ດັ່ງນັ້ນຈະບໍ່ໄດ້ຮັບຜົນສໍາເລັດ.

ການອາຍັດຊັບ ຈໍານວນໜຶ່ງຍັງບໍ່ທັນໄດ້ຮັບຜົນເທົ່າທີ່ຄວນ, ບາງຄັ້ງອົງການຈັດຕັ້ງທີ່ກ່ຽວຂ້ອງຍັງບໍ່ທັນໃຫ້ຄວາມຮ່ວມມືໃນການປະຕິບັດຄໍາສັ່ງອາຍັດ ໂດຍອ້າງວ່າບໍ່ໄດ້ຮັບຄໍາສັ່ງອາຍັດຊັບ ຫຼື ບໍ່ເຫັນຄໍາສັ່ງອາຍັດ ຫຼື ຄໍາສັ່ງອາຍັດຊັບຍື່ນຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງແລ້ວ ໂດຍມີເລກທີ່ຂາເຂົ້າເອກະສານຄັກແນ່ ແຕ່ວິຊາການທີ່ຮັບຜິດຊອບອ້າງວ່າບໍ່ເຫັນ ຫຼື ມີການຕົກເຮ່ຍຂອດຈາລະຈອນເອກະສານ, ພາຍຫຼັງລະເມີດແລ້ວກໍບໍ່ມີມາດຕະການຕໍ່ຜູ້ລະເມີດ.

ການຍົກຍ້າຍອອກຈາກທີ່ດິນ ແລະ ເຮືອນ ຖືວ່າມີບັນຫາຫຍຸ້ງຍາກທີ່ສຸດໃນການຈັດຕັ້ງປະຕິບັດມາດຕະການເພາະ ວ່າກົດໝາຍວ່າບໍ່ໄດ້ກໍານົດລະອຽດ, ຄົບຖ້ວນ ກ່ຽວກັບວິທີ ແລະ ຂັ້ນຕອນໃນການປະຕິບັດ ເປັນຕົ້ນແມ່ນຖ້າລູກໜີ້ ຫຼື ຜູ້ອາໃສຢູ່ທີ່ດິນ ແລະ ເຮືອນ ບໍ່ຍອມຍົກຍ້າຍອອກດ້ວຍຄວາມຕົນເອງແລ້ວຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຈະຍົກຍ້າຍໄປໄວ້ໃສ ແລະ ດໍາເນີນແນວໃດຕໍ່ກັບບຸກຄົນ ແລະ ຊັບສິນທີ່ຈະຍົກຍ້າຍ, ຕໍ່ບັນຫາດັ່ງກ່າວ ຜ່ານມາ ການຈັດຕັ້ງປະຕິບັດຢູ່ນະຄອນຫຼວງວຽງຈັນ ແມ່ນພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໄດ້ລະດົມເຈົ້າໜີ້ ເຊົ່າເຮືອນ ຫຼື ຫ້ອງແຖວ ໃຫ້ລູກໜີ້ ຫຼື ຜູ້ຖືກຍົກຍ້າຍອາໄສຢູ່ ແລະ ເກັບໄວ້ເຄື່ອງຊົ່ວຄາວ ເພື່ອອໍານວຍຄວາມສະດວກ ແລະ ຄວາມເປັນລະບຽບຮຽບຮ້ອຍໃນການຍົກຍ້າຍ, ແຕ່ໃນການປະຕິບັດຕົວຈິງແລ້ວຍັງ

ພົບຄວາມຫຍຸ້ງຍາກຫຼາຍ ເພາະວ່າເວລາໝົດກຳນົດເຊົ່າເຮືອນ ຫຼື ຫ້ອງແຖວ ທີ່ເຈົ້າໜີ້ເຊົ່າໃຫ້ລູກໜີ້ຢູ່ ແລະ ໄວ້ເຄື່ອງນັ້ນ ລູກໜີ້ ຫຼື ຜູ້ຖືກຍົກຍ້າຍບໍ່ຍອມຍົກຍ້າຍອອກ ແລະ ກໍບໍ່ຈ່າຍຄ່າເຊົ່າຕໍ່ ຈຶ່ງເປັນບັນຫາທີ່ບໍ່ສິ້ນສຸດ ແລະ ບາງຄະດີເຈົ້າໜີ້ບໍ່ຍອມເຊົ່າທີ່ຢູ່ໃຫ້ກໍບໍ່ໄດ້ດຳເນີນການຍົກຍ້າຍ, ບາງຄະດີກໍໄດ້ຂົນຍ້າຍເຄື່ອງມາໄວ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ສາມາດເກັບມ້ຽນໄດ້ ແຕ່ລູກໜີ້ ຫຼື ຜູ້ຖືກຍົກຍ້າຍກໍບໍ່ມາຮັບເອົາເຄື່ອງຂອງຜູ້ກ່ຽວ ເຮັດໃຫ້ເຄື່ອງຂອງເສຍຫາຍ, ເຊື່ອມຄຸນ ແລະ ແອອັດຕໍ່ສະຖານທີ່ ແຕ່ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫຼື ນິຕິກຳທີ່ກ່ຽວຂ້ອງ ຍັງບໍ່ໄດ້ກຳນົດອັນລະອຽດໃນການປະຕິບັດຕໍ່ບັນຫາດັ່ງກ່າວເພື່ອເປັນບ່ອນອີງໃນການຈັດ ຕັ້ງປະຕິບັດຄຳຕັດສິນຂອງສານກ່ຽວກັບການຍົກຍ້າຍ.

ການປັບໃໝເປັນມາດຕະການທາງດ້ານການເງິນ ຊຶ່ງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກຳນົດໄວ້ເພື່ອປັບໃໝຕໍ່ຜູ້ບໍ່ຍອມປະຕິບັດຄຳຕັດສິນຂອງສານ ຄະດີແພ່ງ, ແນ່ໃສ່ເພື່ອເຮັດໃຫ້ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຄົບຖ້ວນ ແລະ ປະກົດຜົນເປັນຈິງ. ການປັບໃໝທີ່ວາງອອກແມ່ນມີຈຸດປະສົງສຶກສາອົບຮົມ, ບັງຄັບໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ຕື່ນຕົວປະຕິບັດກໍຄືການໃຊ້ແທນໜີ້ສິນຕາມຄຳຕັດສິນຂອງສານ ແຕ່ການຈັດຕັ້ງປະຕິບັດຕົວຈິງບໍ່ໄດ້ຮັບຜົນ ເພາະຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ມີເຈດຕະນາບໍ່ໃຊ້ແທນໜີ້ສິນຢູ່ແລ້ວ ຈຶ່ງບໍ່ໃຫ້ຄວາມຮ່ວມມືໃນການປັບໃໝ ຫຼື ບໍ່ຍອມຈ່າຍຄ່າປັບໃໝ.

ການປະຕິບັດມາດຕະການທາງອາຍາຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ບໍ່ສາມາດກົດດັນໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຄຳຕັດ ສິນຂອງສານ ຫຼື ນຳເງິນມາໃຊ້ແທນໜີ້ສິນ ເພາະວ່າ ການດຳເນີນຄະດີໃນຂໍ້ຫາບໍ່ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ຫຼື ຄຳສັ່ງຂອງຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານນັ້ນ ແມ່ນບໍ່ສາມາດກັກຕົວ, ກັກຂັງ ຫຼື ຈັບຕົວເພື່ອມາດຳເນີນຄະດີໄດ້ ແຕ່ຕ້ອງລໍຖ້າໃຫ້ມີຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເສຍກ່ອນຈຶ່ງສາມາດກັກຕົວ, ກັກຂັງ ຫຼື ຈັບຕົວ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 0134/ຄປຈ, 04 ທັນວາ 2013 ວ່າດ້ວຍການຈັດຕັ້ງປະຕິບັດມາດຕະການທາງອາຍາ ເຊິ່ງການລໍຖ້າຄຳຕັດສິນ, ຄຳພິພາກສາຂອງສານໃຫ້ໃຊ້ໄດ້ຢ່າງເດັດຂາດນັ້ນ ກໍໃຊ້ເວລາພໍສົມຄວນ ຈຶ່ງເຮັດໃຫ້ມາດຕະການດັ່ງກ່າວບໍ່ສາມາດຊ່ວຍໃນການບັງຄັບ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ນຳເງິນມາໃຊ້ແທນໜີ້ສິນໃຫ້ສຳເລັດຕາມຄຳຕັດສິນຂອງສານໄດ້.

**ຜົນການສຳພາດພະນັກງານຫ້ອງການຍຸຕິທຳເມືອງໄຊເສດຖາ, ຫ້ອງການຍຸຕິທຳເມືອງຈັນທະບູລີ, ຫ້ອງການຍຸຕິທຳເມືອງສີສັດຕະນາກ ແລະ ຫ້ອງການຍຸຕິທຳເມືອງສີໂຄດຕະບອງ**

ການປະຕິບັດມາດຕະການຈັດຕັ້ງປະຕິບັດຄຳຕັດສິນຂອງສານຍັງມີຄວາມຫຍຸ້ງຍາກຫຼາຍ ຍ້ອນຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ບໍ່ໃຫ້ຄວາມຮ່ວມມືໃນການປະຕິບັດ ໂດຍບໍ່ເຂົ້າມາພົບພະນັກງານປະຕິບັດຄຳຕັດສິນຂອງສານຕາມໝາຍຮຽກ, ຫຼົບຫຼີກການປະຕິບັດ, ຍ້າຍທີ່ຢູ່ໃໝ່ເລື້ອຍໆ ແລະ ບໍ່ເຂົ້າຮ່ວມໃນການລົງຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ການປະຕິບັດມາດຕະການກໍຍັງຕ້ອງອາໄສຄວາມຮ່ວມມືຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຕົ້ນແມ່ນການລົງກວດກາ, ເກັບກຳຂໍ້ມູນກ່ຽວກັບທີ່ດິນ ແລະ ເຮືອນການຕີລາຄາ, ການລົງສຶກສາອົບຮົມຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ໃຫ້ຍົກຍ້າຍອອກຈາກທີ່ດິນ ແລະ ເຮືອນ, ການຍົກຍ້າຍຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ອອກຈາກທີ່ດິນ ແລະ ເຮືອນຕົວຈິງ ແລະ ອື່ນໆ ຖ້າວ່າພະນັກງານ ຫຼື ຄະນະກຳມະການຈາກອົງການຈັດຕັ້ງທີ່ກ່ຽວຂ້ອງທີ່ເຂົ້າຮ່ວມໃນການປະຕິບັດບໍ່ໃຫ້ຄວາມຮ່ວມມື ກໍຈະເຮັດໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີຄວາມຫຍຸ້ງຍາກ ແລະ ບໍ່ໄດ້ຮັບຜົນສຳເລັດ.

**ການສົນທະນາ**

**ມາດຕະການທາງແພ່ງ ແລະ ທາງອາຍາຕໍ່ການປະຕິບັດຄຳຕັດສິນຂອງສານເໝາະສົມແລ້ວບໍ່, ສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ຫຼື ບໍ່, ບັນດາມາດຕະການທີ່ກຳນົດໄວ້ນັ້ນພຽງພໍ ແລະ ສອດຄ່ອງແລ້ວ ຫຼື ບໍ່**

ມາດຕະການທາງແພ່ງ ແລະ ທາງອາຍາ ຕໍ່ການປະຕິ ບັດຄຳຕັດສິນຂອງສານ ທີ່ຖືກກຳນົດໄວ້ໃນກົດໝາຍປັດຈຸບັນເຫັນວ່າມີຄວາມເໝາະສົມກັບການຂະຫຍາຍຕົວຂອງສັງຄົມແລ້ວ, ແຕ່ເຖິງຢ່າງໃດກໍຕາມບັນດາມາດຕະການຕ່າງໆທີ່ຖືກກຳນົດໄວ້ໃນຍັງບໍ່ສາມາດນຳມາຈັດຕັ້ງປະຕິບັດ

ໄດ້ທຸກມາດຕະການ ອັນເນື່ອງມາຈາກສາເຫດໃນຕົວຂອງບາງຄະດີ ຫຼື ບາງຄຳຕັດສິນ ເຊັ່ນ ບາງຄຳຕັດສິນທີ່ມີຄວາມຈຳເປັນຕ້ອງໄດ້ປະກາດຂາຍຫຼັກຊັບ ແຕ່ເມື່ອປະກາດຂາຍແລ້ວບໍ່ມີບຸກຄົນໃດມາພິວພັນຊື້ ອາດຍ້ອນລາຄາຫຼັກຊັບເປັນຈຳນວນຫຼວງຫຼາຍ ຈຶ່ງເຮັດໃຫ້ການປະຕິບັດຄຳຕັດສິນຄະດີນັ້ນມີຄວາມລ່າຊ້າ ແລະ ຄ້າງຄາ, ອີກປະການໜຶ່ງບາງມາດຕະການທີ່ບໍ່ສາມາດນຳໃຊ້ໄດ້ນັ້ນ ກໍເນື່ອງມາຈາກມີຄວາມຈຳເປັນຕ້ອງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຫຼື ເວົ້າອີກຢ່າງໜຶ່ງວ່າພາກສ່ວນກ່ຽວຂ້ອງບໍ່ໃຫ້ການຮ່ວມມືຢ່າງເຕັມເມັດເຕັມໜ່ວຍ ເປັນຕົ້ນແມ່ນການອອກຄຳສັ່ງພາຕົວ, ການກວດກາ ແລະ ຫັກເງິນໃນບັນຊີທະນາຄານ ຊຶ່ງຝ່າຍທະນາຄານກໍມີເຫດຜົນວ່າມີຄວາມຈຳເປັນຕ້ອງຮັກສາຄວາມລັບຂອງລູກຄ້າ ເຫຼົ່ານີ້ເປັນຕົ້ນ. ນອກຈາກນີ້ບາງມາດຕະການກໍຖືກນຳໃຊ້ໜ້ອຍທີ່ສຸດ ເປັນຕົ້ນແມ່ນມາດຕະການທາງອາຍາ ກໍລະນີການບໍ່ປະຕິບັດຄຳຕົກລົງຂອງສານ ຊຶ່ງເປັນການກະທຳຜິດທາງອາຍາ ແຕ່ໃນໄລຍະຜ່ານມາອົງການປະຕິບັດຄຳຕັດສິນຂອງສານກໍບໍ່ໄດ້ລາຍງານກ່ຽວກັບພຶດຕິກຳດັ່ງກ່າວຕໍ່ອົງການດຳເນີນຄະດີອາຍາແຕ່ຢ່າງໃດ.

**ຜົນດີ ແລະ ຂໍ້ຄົງຄ້າງໃນການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານ**

ກ່ຽວກັບການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານສາມາດຖອດຖອນບົດຮຽນໄດ້ເຖິງດ້ານດີ ແລະ ຂໍ້ຄົງຄ້າງບາງຈຸດດັ່ງນີ້:

**ດ້ານດີ:**

- ການກຳນົດມາດຕະການຂອງກົດໝາຍເຮັດໃຫ້ອົງການປະຕິບັດຄຳຕັດສິນຂອງສານມີບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ເຮັດໃຫ້ການປະຕິບັດຄຳຕັດສິນຂອງສານສຳເລັດໃນສ່ວນໃຫຍ່ ໃນກໍລະນີທີ່ມີການນຳໃຊ້ມາດຕະການດັ່ງກ່າວ;

–ເມື່ອມີການນຳໃຊ້ມາດຕະການ ເຮັດໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃນບາງຄຳຕັດສິນ ມີຄວາມຈິງໃຈທີ່ຈະປະຕິບັດ ຊຶ່ງໃນເບື້ອງຕົ້ນຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ປະຕິບັດ ແຕ່ເມື່ອອົງການປະຕິບັດຄຳຕັດສິນຫາກລົງໄປກວດກາຊັບ ແລະ ມີການອອກສັ່ງອາຍັດຊັບແລ້ວ ຜູ້ຖືກປະຕິບັດຄຳຕັດສິນຂອງສານຈຳນວນໜຶ່ງກໍນຳເງິນມາຊຳລະຕາມຄຳຕັດສິນຂອງສານ;

**ຂໍ້ຄົງຄ້າງ:**

- ບາງມາດຕະການຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກບໍ່ໄດ້ຮັບການຮ່ວມມືຈາກພາກສ່ວນທີ່ກ່ຽວຂ້ອງ;

– ການນຳໃຊ້ບາງມາດຕະການຍັງມີຫາງສຽງຈົ່ມວ່າຈາກສັງຄົມ.

– ການຕີລາຄາຫຼັກຊັບ ປະກາດຂາຍ ເພື່ອນຳເງິນມາໃຊ້ແທນໜີ້ສິນຕາມຄຳຕັດສິນຂອງສານ ບາງຄະດີບໍ່ສາມາດຂາຍໄດ້ ເຖິງວ່າຈະມີການລຸດລາຄາແລ້ວກໍຕາມ.

**ແນວທາງໃນການປັບປຸງແກ້ໄຂບັນຫາການປະຕິບັດຄຳຕັດສິນຂອງສານທີ່ລ່າຊ້າ**

ໃນປັດຈຸບັນຄະນະນຳກະຊວງກໍໄດ້ໃກ້ຊິດຕິດແທດ ແລະ ອອກຄຳແນະນຳໃຫ້ອົງການປະຕິບັດຄຳຕັດສິນຂອງສານຂຶ້ນແຜນປະຕິບັດຄຳຕັດສິນຂອງສານ ເປັນສະເພາະບຸກຄົນຢ່າງລະອຽດ ຊຶ່ງພະນັກງານປະຕິບັດຜູ້ໜຶ່ງຕ້ອງສາມາດປະຕິ ບັດຄຳຕັດສິນຂອງສານເດືອນໜຶ່ງໃຫ້ສຳເລັດສາມຄະດີ, ນອກຈາກນີ້ສຳລັບຄະດີທີ່ບໍ່ສາມາດປະຕິບັດໄດ້ ຫຼື ບໍ່ມີເງື່ອນໄຂປະຕິບັດເຊັ່ນ: ຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ມີຊັບສິນຫຼື ບໍ່ມີລາຍຮັບ, ມີລາຍຮັບຕ່ຳພຽງແຕ່ພໍຮັບປະກັນການດຳລົງຊີວິດຂອງຕົນເທົ່ານັ້ນ, ຜູ້ຖືກປະຕິບັດຄຳຕັດສິນຂອງສານກັບຄືນປະເທດ ໂດຍບໍ່ມີຊັບສິນຢູ່ ສປປລາວແລະ ບໍ່ແມ່ນປະເທດທີ່ມີສົນທິສັນຍາທີ່ສປປລາວເປັນພາຄີ, ບັນດາເງື່ອນໄຂທີ່ກ່າວມາຖ້າຫາກມີການຢັ້ງຢືນຈາກພາກ ສ່ວນກ່ຽວຂ້ອງແລ້ວ ອົງການປະຕິບັດຄຳຕັດສິນຂອງສານຕ້ອງອອກຄຳສັ່ງໂຈະການປະຕິບັດ ແລ້ວແຈ້ງໃຫ້ຄູ່ຄວາມຊາບ ແຈ້ງໃຫ້ອົງການໄອຍະການຂັ້ນດຽວກັນຊາບ, ແຕ່ເມື່ອມີເງື່ອນໄຂໃນການປະຕິບັດແລ້ວກໍຕ້ອງນຳເອົາຄຳຕັດສິນດັ່ງກ່າວມາຈັດຕັ້ງປະຕິບັດ.

**ຂໍ້ສະຫຼຸບ**

ການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ການປະຕິບັດຄຳຕັດສິນຂອງສານແມ່ນມີກົດໝາຍ ແລະ ນິຕິກຳເປັນບ່ອນອີງ ແລະ ເຫັນວ່າມີຄວາມເໝາະສົມກັບການຂະຫຍາຍຕົວຂອງສັງຄົມແລ້ວ ແຕ່ມີບາງມາດຕະການຍັງກຳນົດບໍ່ລະອຽດ, ບໍ່ຄົບຖ້ວນກ່ຽວກັບວິທີ ແລະ ຂັ້ນຕອນໃນການປະຕິບັດ, ລູກໜີ້ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຍັງບໍ່ທັນໃຫ້ຄວາມຮ່ວມມືໃນການປະຕິບັດເທົ່າທີ່ຄວນ ຊຶ່ງສະແດງອອກໃນການໃຊ້ມາດຕະການຕ່າງໆ ເຊັ່ນ: ມາດຕະການພາຕົວ ກົດໝາຍບໍ່ໄດ້ກຳນົດຂັ້ນຕອນອັນລະອຽດເຮັດໃຫ້ການພາຕົວຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ມາພົບພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຍັງມີຄວາມຫຍຸ້ງຍາກໃນການປະຕິບັດຕົວຈິງ ເພາະຜູ້ຖືກປະຕິບັດຄຳ

ຕັດສິນຂອງສານ ຫຼື ລູກໜີ້ ແມ່ນມີເຈດຕະນາຫຼົບຫຼີກ ຫຼື ຍ້າຍທີ່ຢູ່ເຮັດໃຫ້ຫຍຸ້ງຍາກໃນການຕິດຕາມ, ອີກປະການໜຶ່ງຖ້າບໍ່ໄດ້ຮັບການຮ່ວມມືຈາກເຈົ້າໜ້າທີ່ງກ່ຽວຂ້ອງກໍຈະບໍ່ໄດ້ຮັບຜົນ, ການຍຶດຊັບ ກໍມີຄວາມຫຍຸ້ງຍາກຫຼາຍ ສ່ວນຫຼາຍເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບ ຈະບໍ່ໃຫ້ຄວາມຮ່ວມມື ຫຼື ມີການຂັດຂວາງ, ຕ້ອງອາໄສຄວາມຮ່ວມມື ແລະ ຊ່ວຍ ເຫຼືອຈາກເຈົ້າໜ້າທີ່ຕຳຫຼວດ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຖ້າບໍ່ດັ່ງນັ້ນຈະບໍ່ໄດ້ຮັບຜົນສຳເລັດ, ການອາຍັດຊັບຍັງບໍ່ທັນໄດ້ຮັບຜົນເທົ່າທີ່ຄວນ, ບາງຄັ້ງອົງການຈັດຕັ້ງທີ່ກ່ຽວຂ້ອງຍັງບໍ່ທັນໃຫ້ຄວາມຮ່ວມມືໃນການປະຕິບັດຄຳສັ່ງອາຍັດ ໂດຍອ້າງວ່າບໍ່ໄດ້ຮັບຄຳສັ່ງອາຍັດຊັບ ຫຼື ບໍ່ເຫັນຄຳສັ່ງອາຍັດ ຫຼື ຄຳສັ່ງອາຍັດຊັບ ຍື່ນຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງແລ້ວ ໂດຍມີເລກທີ່ຂາເຂົ້າເອກະສານຄັກແນ່ ແຕ່ວິຊາການທີ່ຮັບຜິດຊອບອ້າງວ່າບໍ່ເຫັນ ຫຼື ມີການຕົກເຮ່ຍຂອດຈາລະຈອນເອກະສານ, ພາຍຫຼັງລະເມີດແລ້ວກໍບໍ່ມີມາດຕະການຕໍ່ຜູ້ລະເມີດ, ມາດຕະການຍົກຍ້າຍ ການຍົກຍ້າຍອອກຈາກທີ່ດິນ ແລະ ເຮືອນ ຖືວ່າມີບັນຫາຫຍຸ້ງຍາກທີ່ສຸດໃນການຈັດຕັ້ງປະຕິບັດມາດຕະການ ເພາະວ່າກົດໝາຍວ່າບໍ່ໄດ້ກຳນົດລະອຽດ, ຄົບຖ້ວນ ກ່ຽວກັບວິທີ ແລະ ຂັ້ນຕອນໃນການປະຕິບັດ ເປັນຕົ້ນແມ່ນຖ້າລູກໜີ້ ຫຼື ຜູ້ອາໄສຢູ່ທີ່ດິນ ແລະ ເຮືອນ ບໍ່ຍອມຍົກຍ້າຍອອກດ້ວຍຄວາມຕົນເອງແລ້ວຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະຍົກຍ້າຍໄປໄວ້ໃສ ແລະ ດຳເນີນແນວໃດຕໍ່ກັບບຸກຄົນ ແລະ ຊັບສິນທີ່ຈະຍົກຍ້າຍ ແລະ ມາດຕະການປັບໃໝ ການຈັດຕັ້ງປະຕິບັດຕົວຈິງບໍ່ໄດ້ຮັບຜົນ ເພາະຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ມີເຈດຕະນາບໍ່ໃຊ້ແທນໜີ້ສິນຢູ່ແລ້ວ ຈຶ່ງບໍ່ໃຫ້ຄວາມຮ່ວມມືໃນການປັບໃໝ ຫຼື ບໍ່ຍອມຈ່າຍຄ່າປັບໃໝ. ສ່ວນມາດຕະການທາງອາຍາ ຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ບໍ່ສາມາດກົດດັນໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ໃຫ້ຄວາມຮ່ວມມືໃນການຈັດ ຕັ້ງປະຕິບັດຄຳຕັດສິນຂອງສານ ຫຼື ນຳເງິນມາໃຊ້ແທນໜີ້ສິນ ເພາະວ່າການດຳເນີນຄະດີໃນຂໍ້ຫາບໍ່ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ຫຼື ຄຳສັ່ງຂອງຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານນັ້ນ ແມ່ນບໍ່ສາມາດກັກຕົວ, ກັກຂັງ ຫຼື ຈັບຕົວ ເພື່ອມາດຳເນີນຄະດີໄດ້ ແຕ່ຕ້ອງລໍຖ້າໃຫ້ມີຄຳຕັດສິນ ຫຼື ຄຳພິພາກ ສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເສຍກ່ອນຈຶ່ງສາມາດກັກຕົວ, ກັກຂັງ ຫຼື ຈັບຕົວ ຊຶ່ງການລໍຖ້າຄຳຕັດສິນ, ຄຳພິພາກ ສາຂອງສານໃຫ້ໃຊ້ໄດ້ຢ່າງເດັດຂາດນັ້ນ ກໍໃຊ້ເວລາພໍສົມຄວນ ຈຶ່ງເຮັດໃຫ້ມາດຕະການດັ່ງກ່າວບໍ່ສາມາດຊ່ວຍໃນການບັງຄັບ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫຼື ລູກໜີ້ ນຳເງິນມາໃຊ້ແທນໜີ້ສິນໃຫ້ສຳເລັດຕາມຄຳຕັດສິນຂອງສານໄດ້.

**ຂໍ້ສະເໜີ**

ເພື່ອເຮັດໃຫ້ປະຊາຊົນຮູ້ເຖິງພາລະບົດບາດຂອງອົງການປະຕິບັດຄຳຕັດສິນຂອງສານ ໃຫ້ຜູ້ຖືກປະຕິຍັດຄຳຕັດສິນຂອງສານປະຕິບັດຕາມດ້ວຍຄວາມສະມັກໃຈ, ຍອມປະຕິບັດເຮັດໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງຖືກຕ້ອງຕາມຂັ້ນຕອນ ແລະ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະ.ພາກສ່ວນທີ່ກ່ຽວຂ້ອງຄວນປະຕິບັດດັ່ງນີ້:

- ໂຄສະນາເຜີຍແຜ່ກົດໝາຍໃນທຸກຮູບແບບ, ຜັນຂະຫຍາຍກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ລົງສູ່ທ້ອງຖິ່ນໂດຍສະເພາະແມ່ນອົງການປົກຄອງບ້ານໃຫ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບພາລະບົດບາດຂອງອົງການປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ປະຊາຊົນຮູ້ ແລະ ເຂົ້າໃຈເລິກເຊິ່ງກ່ຽວກັບມາດຕະການປະຕິບັດຄຳຕັດສິນຂອງສານ;
- ການນຳໃຊ້ມາດຕະການປະຕິບັດຄຳຕັດສິນຂອງສານຄວນເອົາໃຈໃສ່ໃຫ້ສອດຄ່ອງກັບ ຫຼັກການເຂັ້ມງວດ, ເດັດຂາດ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ
- ຄວນມີວິທີການສຶກສາອົບຮົມໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ເຂົ້າໃຈແລະເຫັນດີ, ເຫັນພ້ອມແລະຮ່ວມມືໃນການປະຕິບັດ ກ່ອນນຳໃຊ້ມາດຕະການປະຕິບັດຄຳຕັດສິນຂອງສານຕາມກົດໝາຍ;
- ຄວນອອກນິຕິກຳລຸ່ມກົດໝາຍ ເພື່ອຜັນຂະຫຍາຍ ແລະ ກຳນົດລະອຽດ, ກຳນົດໃຫ້ຄົບຖ້ວນກ່ຽວກັບວິທີ, ຂັ້ນຕອນໃນການນຳມາດມາດຕະການປະຕິບັດຄຳຕັດສິນຂອງສານ

**ເອກະສານອ້າງອີງ**


ສະພາແຫ່ງຊາດ. (2015). *ລັດຖະທຳມະນູນ ແຫ່ງ ສປປ ລາວ.*

ສະພາແຫ່ງຊາດ. (2008). *ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.*

ສະພາແຫ່ງຊາດ. (2021). *ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.*

ລັດຖະບານ. (2013). *ດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.*

ກະຊວງຍຸຕິທຳ. (2017) *ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.*

ກະຊວງຍຸຕິທຳ. (2019). *ຄຳແນະນຳວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.*

ກະຊວງຍຸຕິທຳ. (2019). *ຄຳແນະນຳກ່ຽວກັບວຽກງານການເງິນ, ການຮິບ ແລະ ມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.*

ກະຊວງຍຸຕິທຳ. (2019). *ຄຳແນະນຳກ່ຽວກັບການຕີລາຄາ, ການຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.*